vhs DVV International

Education for Everyone. Worldwide.

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

*ຈົດໝາຍຂ່າວ 2023*

# ການຮຽນຮູ້ຕະຫຼອດຊີວິດ & ການສຶກສານອກໂຮງຮຽນ

## ໃນ ສປປ ລາວ ແລະ ອາຊີຕາເວັນສ່ຽງໃຕ້



*ສະໜັບສະໜູນໂດຍ*

Federal Ministry
for Economic Cooperation
and Development

vhs
DVV International

Education for Everyone. Worldwide.



ສະບາຍດີທ່ານຜູ້ອ່ານທີ່ຮັກແພງ,

ພາຍຫຼັງທີ່ໄດ້ມີການໝູນວຽນຕຳແໜ່ງຜູ້ອຳນວຍການໃນລະດັບພາກພື້ນ ໃນລະຫວ່າງກາງປີ 2023, ຂ້າພະເຈົ້າມີຄວາມຍິນດີເປັນຢ່າງຍິ່ງທີ່ຈະນຳສະເໜີຈົດໝາຍຂ່າວສະບັບທຳອິດຂອງຂ້າພະເຈົ້າ ນັບຕັ້ງແຕ່ໄດ້ມາປະຈຳການຢູ່ທີ່ຫ້ອງການ ດີວີວີ ອິນເຕີເນເຊິນແນວ ປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້. ໃນເດືອນທຳອິດສ່ວນຫຼາຍແມ່ນຂະບວນການສົ່ງມອບໜ້າວຽກ, ພົບປະ ແລະ ຮຽນຮູ້ກ່ຽວກັບເຄືອຂ່າຍຄູ່ຮ່ວມພັດທະນາ ແລະ ພະຍາຍາມຕໍ່ຍອດໃນການສະໜັບສະໜູນໃຫ້ມີໂຄງສ້າງທີ່ຍືນຍົງສຳລັບການສຶກສານອກໂຮງຮຽນໃນປະເທດຄູ່ຮ່ວມພັດທະນາ. ຂະບວນການຮຽນຮູ້ນີ້ຈະດຳເນີນຕໍ່ໄປໃນອະນາຄົດຢ່າງແນ່ນອນ ເນື່ອງຈາກມັນບໍ່ມີວິທີແກ້ບັນຫາທີ່ສຳເລັດຮູບ ແຕ່ມັນເປັນຂະບວນການຮ່ວມມືກັນໂດຍພິຈາລະນາເຖິງເງື່ອນໄຂສະເພາະຂອງປະເທດ ແລະ ຫຼັກການສຳຄັນຂອງ ດີວີວີ ອິນເຕີເນເຊິນແນວ: ທິດທາງຂອງຄູ່ຮ່ວມພັດທະນາ, ຄວາມເປັນເຈົ້າການ ແລະ ຄວາມເຄົາລົບຮ່ວມກັນ.

ມາຮອດວຽງຈັນຫວ່າງບໍ່ດົນມານີ້, ຂ້າພະເຈົ້າຂໍແບ່ງປັນຄວາມປະທັບໃຈ ແລະ ຂໍ້ສັງເກດທີ່ໄດ້ເກີດຂຶ້ນໃນຊ່ວງເດືອນທີ່ຜ່ານມາ ແລະ ຕັ້ງຕາລໍຖ້າ. ໃນທາງກົງກັນຂ້າມ, ທ່ານຜູ້ອ່ານຈະໄດ້ເຫັນບົດຄວາມທີ່ເປັນການທົບທວນກ່ຽວກັບສີ່ປີຜ່ານມາຂອງອະດີດ ຜູ້ອຳນວຍການປະຈຳພາກພື້ນ ດຣ. ໂຢຮັ່ນ ໄຣເມີນ, ຂ້າພະເຈົ້າຢາກຈະຂໍຂອບໃຈອີກຄັ້ງ ກ່ຽວກັບການມີສ່ວນຮ່ວມທີ່ດີເລີດຂອງລາວ. ໃນໄລຍະທີ່ລາວດຳລົງຕຳແໜ່ງເປັນຜູ້ອຳນວຍການປະຈຳພາກພື້ນ, ພວກເຮົາໄດ້ເພີ່ມທະວີການຮ່ວມມືກັບບັນດາຄູ່ຮ່ວມງານທີ່ສຳຄັນ ຈາກກະຊວງສຶກສາທິການ ແລະ ກິລາ ໃນທຸກຂັ້ນ ແລະ ໄດ້ມີຂໍ້ລິເລີ່ມໃໝ່ໃນຂົງເຂດການສຶກສານອກໂຮງຮຽນ, ເຖິງແມ່ນວ່າຈະມີສິ່ງທ້າທາຍໃຫຍ່ຫຼວງຈາກການລະບາດຂອງພະຍາດ ໂຄວິດ 19.

ໂດຍອ້າງອີງຈາກປະສົບການຂອງຂ້າພະເຈົ້າໃນຖານະ ອະດີດຜູ້ອຳນວຍການຂອງ ດີວີວີ ອິນເຕີເນເຊິນແນວ ຫ້ອງການໃຫຍ່, ຂ້າພະເຈົ້າມີບາງຂໍ້ສັງເກດຈາກທັດສະນະຕ່າງໆໃນທົ່ວໂລກ. ໄດ້ມີການພັດທະນາທີ່ດີໃນລະດັບມະຫາພາກ ຢູ່ ສປປ ລາວ ແລະ ກຳປູເຈຍ. ທັງສອງປະເທດໄດ້ດຳເນີນບາດກ້າວສຳຄັນເພື່ອຊຸກຍູ້ການຮຽນຮູ້ຕະຫຼອດຊີວິດ ໂດຍສະເພາະແມ່ນການ ຮັບຮອງເອົາດຳລັດ ແລະ ນະໂຍບາຍຕາມລຳດັບ. ເອກະສານສຳຄັນເຫຼົ່ານີ້ບໍ່ພຽງແຕ່ກົງກັບເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ວາລະການສຶກສາ 2030 ຂອງອົງການອຸຍເນສໂກ (SDG-4). ນອກຈາກນີ້ຍັງເປັນການປູທາງໄປສູ່ຄວາມເຂົ້າໃຈແບບອົງລວມຂອງການສຶກສາທີ່ໃຫ້ໂອກາດການຮຽນຮູ້ໃຫ້ແກ່ປະຊາຊົນທຸກກຸ່ມອາຍຸ ແລະ ທົ່ວທຸກຂະແໜງ ການ. ເພື່ອເປັນການສະແດງໃຫ້ເຫັນຄວາມຄືບໜ້ານີ້ຕື່ມອີກ, ທ່ານຈະພົບເຫັນໃນຈົດໝາຍຂ່າວສະບັບນີ້ ບົດຄວາມຕ່າງໆ ກ່ຽວກັບການສົ່ງເສີມແຜນການເຄື່ອນໄຫວການຮຽນຮູ້ຕະຫຼອດຊີວິດໃນປະເທດກຳປູເຈຍ ແລະ ການສຶກສາກ່ຽວກັບແຮງຈູງໃຈທີ່ຈະເຂົ້າຮ່ວມການສຶກສາໃນລາວຄັ້ງທີສອງ. ນອກຈາກນັ້ນ, ພວກເຮົາກໍໄດ້ນຳສະເໜີກ່ຽວກັບການພັດທະນາສູນການຮຽນຮູ້ຊຸມຊົນ ແລະ ການຝຶກອົບຮົມການລິເລີ່ມຂອງຄູຝຶກ, ປຶ້ມຄູ່ມືເຫຼັ້ມໃໝ່ສຳລັບການສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ຂັ້ນຕອນໃນການພັດທະນາ ແລະ ນຳໃຊ້ ແອັບພລິເຄຊັນມືຖື (EdApp). ສຸດທ້າຍ, ອົງການຈັດຕັ້ງຄູ່ຮ່ວມງານໃນລະດັບພາກພື້ນຂອງພວກເຮົາ, ສະມາຄົມອາຊີໃຕ້ສຳລັບການສຶກສາຂັ້ນພື້ນຖານ ແລະຜູ້ໃຫຍ່ (ASPBAE), ໄດ້ນຳສະເໜີກ່ຽວກັບຂະບວນການຕິດຕາມທີ່ກ່ຽວຂ້ອງກັບຜົນໄດ້ຮັບຂອງກອງປະຊຸມ CONFINTEA VII ທີ່ໄດ້ຈັດຂຶ້ນໃນປີ 2022.

ຂ້າພະເຈົ້າຫວັງວ່າຈະໄດ້ຮັດແໜ້ນການຮ່ວມມືທີ່ມີໝາກຜົນກັບຄູ່ຮ່ວມງານຂອງພວກເຮົາ ເຊິ່ງຈະກ້າວເຂົ້າສູ່ໂຄງການໄລຍະໃໝ່ ປີ 2024. ຂ້າພະເຈົ້າຂໍໃຫ້ທ່ານເພີດເພີນກັບການອ່ານ.

ດ້ວຍຄວາມຈິງໃຈ

*Christoph Jost*

ຜູ້ອຳນວຍການປະຈຳພາກພື້ນ

# ບົດຂອງການຮຽນຮູ້ຕະຫຼອດຊີວິດໃນ ສປປ ລາວ

*Johann Heilmann,* DVV International

ຄຳເວົ້າທົ່ວໄປທີ່ເຮົາມັກຈະໄດ້ຍິນເວລາຄົນເຮົານຶກຫວນຄືນໄປໃນຊ່ວງໄລຍະໜຶ່ງຂອງຊີວິດຄື "ເວລາຜ່ານໄປແລ້ວ". ແທ້ຈິງແລ້ວ, ນີ້ແມ່ນສິ່ງທີ່ຂ້າພະເຈົ້າຕ້ອງຍອມຮັບເຊັ່ນດຽວກັນ, ເຖິງແມ່ນໃນຊ່ວງເວລາສີ່ປີທີ່ຢູ່ໃນນະຄອນຫຼວງວຽງຈັນ ເບິ່ງຄືວ່າຂ້າພະເຈົ້າເກືອບວ່າຍຸດຢູ່ບ່ອນເກົ່າ. ຂ້າພະເຈົ້າໄດ້ເລີ່ມຕົ້ນວຽກໃນຕຳແໜ່ງຜູ້ອຳນວຍການປະຈຳພາກພື້ນຂອງ ດີວີວີ ອິນເຕີເນເຊີນແນວ ສຳລັບອາຊີຕາເວັນອອກສຽງໃຕ້ໃນເດືອນມິຖຸນາ 2019 - ໄລຍະເວລາພຽງເກົ້າເດືອນກ່ອນທີ່ພວກເຮົາຈະປະເຊີນກັບໂລກລະບາດທີ່ບໍ່ຄາດຄິດ ທີ່ບໍ່ພຽງທ້າທາຍພວກເຮົາໃນສ່ວນຕົວ ແຕ່ມັນຍັງພະຍາຍາມເຂົ້າມາແຊກແຊງໃນວຽກວິຊາສະເພາະຂອງພວກເຮົາ. ໃນຂະນະທີ່ມີການຈຳກັດການເຂົ້າອອກປະເທດ ໃນປີ 2020 ຈະເກີດຂຶ້ນໃນໄລຍະສັ້ນໆ, ແຕ່ພວກເຮົາໄດ້ຮັບຜົນກະທົບໂດຍສະເພາະໃນລາວ ໄລຍະເດືອນເມສາ 2021 ຫາເດືອນກຸມພາ 2022: ໂຮງຮຽນຖືກປິດ, ການເດີນທາງເກືອບເປັນໄປບໍ່ໄດ້, ປະຊາຊົນສ່ວນຫຼາຍເຮັດວຽກຈາກເຮືອນ ແລະ ກິດຈະກຳທີ່ກ່ຽວຂ້ອງກັບປະຊາຊົນຈຳນວນຫຼາຍບໍ່ສາມາດຈັດຂຶ້ນໄດ້.

ເວົ້າອີກຢ່າງໜຶ່ງກໍຄື: ວຽກປະຈຳວັນຂອງຂ້າພະເຈົ້າເບິ່ງແຕກຕ່າງໄປຈາກເດີມແນ່ນອນ ເມື່ອທຽບໃສ່ກັບສິ່ງທີ່ຂ້າພະເຈົ້າຄາດຫວັງກ່ອນທີ່ຈະມາປະເທດລາວ. ແຕ່ສິ່ງນີ້ຍັງໄດ້ສະແດງໃຫ້ເຫັນເຖິງຄວາມຈຳເປັນຂອງຫົວຂໍ້ໜຶ່ງທີ່ສຳຄັນ ທີ່ພວກເຮົາກຳລັງສູ້ຊົນໃນວຽກງານຂອງພວກເຮົາໃນ ສປປ ລາວ ຄື: ການຮຽນຮູ້ຕະຫຼອດຊີວິດ. ທັນໃດນັ້ນ ພວກເຮົາທຸກຄົນພົບວ່າຕົວເຮົາເອງນັ້ນຢູ່ໃນກອງປະຊຸມອອນໄລນ໌, ພັດທະນາຮູບແບບການສື່ສານແບບໃໝ່ ແລະ ຄິດຕຶກຕອງຫາວິທີການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນຊ່ວງເວລາທີ່ທ້າທາຍເຫຼົ່ານັ້ນ. ແລະ ນີ້ກໍ່ໄດ້ເປັນການເປີດເສັ້ນທາງໃໝ່, ເສັ້ນທາງໃໝ່ສຳລັບການຮຽນຮູ້ ແລະ ເສັ້ນທາງໃໝ່ຂອງການຮ່ວມມື. ບາງທີສູນພັດທະນາການສຶກສານອກໂຮງຮຽນ (ສພນ) ອາດຈະບໍ່ໄດ້ພົບກັນທີ່ວັງວຽງໃນຕົ້ນປີ 2023 ເພື່ອເຮັດວຽກກ່ຽວກັບການລວບລວມເອົາເນື້ອໃນຂອງບັນດາໂຄງການສຶກສາທຽບເທົ່າ NFE ເຂົ້າໃນແອັບ ແລະ ທົດລອງໃຊ້ຫຼັງຈາກນັ້ນໃນໄວໆ ນີ້ ຖ້າບໍ່ມີພະຍາດລະບາດ? ບາງທີພວກເຮົາອາດຈະບໍ່ໄດ້ຄິດທົບທວນກ່ຽວກັບວິທີທີ່ພວກເຮົາສາມາດເຮັດໃຫ້ຂະບວນການເຮັດວຽກຂອງພວກເຮົາມີປະສິດທິພາບຫຼາຍຂຶ້ນ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍໃນການເດີນທາງ ເພື່ອນຳໄປໃຊ້ສະເພາະເວລາເດີນທາງໄກ?

ຂ້າພະເຈົ້າສາມາດຮັບຮູ້ໄດ້ ເຖິງແມ່ນວ່າຈະມີຄວາມຫຍຸ້ງຍາກຫຼາຍໃນຊ່ວງເວລານັ້ນ, ແຕ່ພວກເຮົາຍັງຕ້ອງຫາວິທີຈັດການເພື່ອກ້າວໄປຂ້າງໜ້າ ແລະ ນຳໃຊ້ປະໂຫຍດຈາກການປ່ຽນແປງທີ່ເກີດຂຶ້ນທັນທີທັນໃດ. ແລະ ແນ່ນອນວ່າ ນີ້ແມ່ນຄຸນນະພາບທີ່ພວກເຮົາທຸກຄົນຕ້ອງການໃນອະນາຄົດເຊັ່ນດຽວກັນ ແລະ ນັ້ນແມ່ນເຫດຜົນທີ່ວ່າການຮຽນຮູ້ຕະຫຼອດຊີວິດຈຶ່ງມີຄວາມສຳຄັນຫຼາຍ. ເຊັ່ນດຽວກັນກັບໃນຊຸມປີຜ່ານມາ ພວກເຮົາບໍ່ຮູ້ວ່າຈະຕ້ອງໄດ້ຮຽນຮູ້ຫຼາຍຢ່າງກ່ຽວກັບການປ້ອງກັນການຕິດເຊື້ອ, ບໍ່ຮູ້ວ່າພວກເຮົາຈະຕ້ອງຮຽນຮູ້ຫຍັງອີກໃນສິບປີຕໍ່ຈາກນີ້ - ແຕ່ມັນແນ່ນອນວ່າເຮົາຈະຕ້ອງຮຽນຮູ້ສິ່ງໃໝ່ໆ, ສະນັ້ນແລ້ວ, ເຮົາຕ້ອງພ້ອມທີ່ຈະຮຽນຮູ້. ຖ້າຫວນຄືນໃນສີ່ປີຂອງຂ້າພະເຈົ້າໃນລາວທີ່ຫາກໍ່ຈົບລົງໃນເດືອນມິຖຸນາປີນີ້, ຂ້າພະເຈົ້າສາມາດເວົ້າໄດ້ວ່າພວກເຮົາອາດບໍ່ບັນລຸຜົນໄດ້ທຸກຢ່າງໃນດ້ານໂຄງສ້າງ, ການດຳເນີນການຝຶກອົບຮົມ ຫຼື ການພັດທະນາຫຼັກສູດ. ແຕ່ຂ້າພະເຈົ້າຫວັງຢ່າງຍິ່ງວ່າທີມງານ ດີວີວີຂອງພວກເຮົາໃນລາວ ແລະ ພາກພື້ນ ແລະ ກັບຄູ່ຮ່ວມງານຂອງພວກເຮົາທັງໝົດຂອງພວກເຮົາໄດ້ຫຍັບເຂົ້າໃກ້ຂັ້ນຕອນສຳຄັນຫຼາຍຂຶ້ນເພື່ອຕຽມໃຫ້ຄົນອ້ອມໂຕພວກເຮົາໃຫ້ມີຄວາມພ້ອມສຳລັບການຮຽນຮູ້ຢ່າງຕໍ່ເນື່ອງ ສຳລັບເປີດຮັບການຮຽນຮູ້ສິ່ງໃໝ່ໆ ແລະ ມີຄວາມສຸກກັບການຮຽນຮູ້.

ຈຸດປະສົງອັນໜຶ່ງທີ່ພວກເຮົາຕັ້ງໄວ້ໃນວຽກງານຂອງພວກເຮົາສະເໝີແມ່ນການສ້າງຜົນກະທົບຢ່າງແທ້ຈິງ. ເພື່ອບັນລຸຄວາມຍືນຍົງ. ເພື່ອໃຫ້ແນ່ໃຈວ່າຄວາມສຳເລັດຂອງໂຄງການຄົງຈະຢູ່ໄດ້ຍາວນານເກີນກວ່າການສິ້ນສຸດຂອງກິດຈະກຳສຸດທ້າຍຂອງໂຄງການ. ເຖິງແມ່ນວ່າຈະຫຍຸ້ງຍາກໃນຫຼາຍດ້ານ, ຂົງເຂດໜຶ່ງທີ່ສະແດງໃຫ້ເຫັນເຖິງຄວາມສຳເລັດທີ່ຍືນຍົງໂດຍບໍ່ຕ້ອງສົງໃສເລີຍແມ່ນດ້ານຊັບພະຍາກອນມະນຸດ. ໃນນາມ ດີວີວີ ອິນເຕີເນເຊີນແນວ, ພວກເຮົາໄດ້ມີສ່ວນຮ່ວມໃນຫຼາຍຂົງເຂດທີ່ແຕກຕ່າງກັນຂອງວຽກງານການສຶກສາ ແລະ ການຮຽນຮູ້ ໃນ 14 ປີທີ່ຜ່ານມາ, ແຕ່ການປັບປຸງສິ່ງໜຶ່ງ ທີ່ໂດດເດັ່ນສຳລັບຂ້າພະເຈົ້າ, ແມ່ນຜົນກະທົບຂອງການສ້າງຄວາມສາມາດຂອງບຸກຄົນ. ເປັນເລື່ອງທີ່ດີຫຼາຍທີ່ໄດ້ເຫັນຄູຝຶກໃນວົງຈອນການຝຶກອົບຮົມສຳລັບນັກການສຶກສາຜູ້ໃຫຍ່ຈຳນວນຫຼາຍຍັງມີສ່ວນຮ່ວມໃນການຝຶກອົບຮົມຢ່າງຫ້າວຫັນ ແລະ ເປີດໂລກະທັດໃຫ້ກວ້າງຂຶ້ນຕື່ມອີກ. ດ້ວຍເຫດນີ້, ຈຶ່ງເປັນການປະກອບສ່ວນທີ່ຊ່ວຍເພີ່ມການເຂົ້າເຖິງກຸ່ມເປົ້າໝາຍຂອງພວກເຮົາ, ໂດຍສະເພາະໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກເພື່ອໃຫ້ໂອກາດການຮຽນຮູ້ຕະຫຼອດຊີວິດ.

ບົນຈິດໃຈນີ້, ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງຊຸມຊົນການສຶກສາຜູ້ໃຫຍ່ ແລະ ການສຶກສານອກໂຮງຮຽນ ສຳລັບການຮ່ວມມືທີ່ດີເລີດໃນໄລຍະສີ່ປີທີ່ຜ່ານມາ. ຂໍໃຫ້ທຸກທ່ານຈົ່ງສືບຕໍ່ສູ້ຊົນເພີ່ມທະວີການເຂົ້າເຖິງກຸ່ມເປົ້າໝາຍຂອງພວກເຮົາໃຫ້ມີການສຶກສາທີ່ມີຄຸນນະພາບ. ແລະ ຂໍໃຫ້ທຸກທ່ານສືບຕໍ່ປະຕິບັດສິ່ງນີ້ໂດຍຜ່ານໂຄງສ້າງການສຶກສານອກໂຮງຮຽນໃນລາວ ແລະ ກໍາປູເຈຍໃຫ້ມີຄວາມເຂັ້ມແຂງ!

ຫວັງວ່າຈະໄດ້ຕິດຕໍ່ກັບຫຼາຍໆທ່ານ ແລະ ດ້ວຍຄວາມປາຖະໜາດີ
ຈາກ ດີວີວີ ອິນເຕີເນເຊີນແນວ ສຳນັກງານໃຫຍ່!



# ກໍລະນີສຶກສາ – ຈຸດເລີ່ມຕົ້ນຂອງການເປັນຄູຝຶກໃຫ້ແກ່ໂຄງການ ແລະ ສູນ ພັດທະນາການສຶກສານອກໂຮງຮຽນພາກເໜືອ

*ເຫຼັກໄຫຼ ສຸດທະວິໄລ,* DVV International, ລາວ

““ບໍ່ວ່າຈະເປັນຂ້ອຍເຝິກອົບຮົມອອນໄລນ໌ ຫຼື ອອບໄລນ໌, ຜົນສຳເລັດແມ່ນຂຶ້ນກັບປັດໃຈຕ່າງໆ ລວມທັງຄຸນນະພາບຂອງອຸປະກອນການຝຶກອົບຮົມ, ຄວາມເຂົ້າໃຈຂອງຜູ້ເຂົ້າຝຶກ ຫຼື ຜູ້ຊົມ, ການປະສານງານ ແລະ ການກະກຽມທີ່ດີ, ແລະ ການເຮັດວຽກເປັນທີມທີ່ເຂັ້ມແຂງ,” ທ່ານ ນາງ ວັນເພັງ ຄົງຈະເລີນ ແບ່ງປັນ.

ທີ່ແຂວງບໍລິຄໍາໄຊ, ສປປ ລາວ: ນາງ ວັນເພັງ ສາທິດກິດຈະກໍາ ຢ່າງຫ້າວຫັນ ແລະ ອົດທົນກັບຜູ້ເຂົ້າຮ່ວມ ທີ່ຫໍປະຊຸມບ້ານວັດທາດ ໃນພາກກາງຂອງ ສປປ ລາວ, ໃນກອງປະຊຸມຝຶກອົບຮົມທັກສະການສື່ສານໃຫ້ແກ່ແມ່ຍິງຊຸມຊົນ. ຫົວຂໍ້ນີ້ແມ່ນຢູ່ໃນປຶ້ມຄູ່ມືການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ທີ່ໄດ້ຮັບການອະນຸມັດໂດຍກະຊວງສຶກສາທິການ ແລະ ກິລາ ໃນເດືອນກຸມພາ 2023. ລາວໄດ້ເນັ້ນໜັກກັບຜູ້ແນະນໍາ ແລະ ທີມງານຄູຝຶກວ່າມາຕະຫຼອດວ່າ "ຄົນເຮົາຮຽນຮູ້ໄດ້ດີທີ່ສຸດເມື່ອພວກເຂົາຮູ້ສຶກປອດໄພ ແລະມີຄວາມສຸກ".

*"ຂ້າພະເຈົ້າມີຄວາມປະທັບໃຈຫຼາຍນັບຕັ້ງແຕ່ຂ້າພະເຈົ້າໄດ້ເຂົ້າຮ່ວມໂຄງການຄັ້ງທໍາອິດ, ແລະ ຂ້າພະເຈົ້າຂໍຂອບໃຈຢ່າງຈິງໃຈທີ່ອະນຸຍາດໃຫ້ຂ້າພະເຈົ້າເຮັດວຽກໃນໂຄງການ ແລະ ທີມງານຈາກພະແນກຕ່າງໆ - ໂດຍສະເພາະ ຈາກກົມການສຶກສານອກໂຮງຮຽນ ແລະ ສູນພັດທະນາການສຶກສານອກໂຮງຮຽນ"*

ຄູຝຶກເພດຍິງ ອາຍຸ 35 ປີ ເວົ້າວ່ານາງມັກການຮຽນຮູ້ ແລະ ແລກປ່ຽນທັກສະ ແລະ ຄວາມຮູ້ກັບຂະແໜງຕ່າງໆ, ໝູ່ເພື່ອນ ແລະ ຄູ່ຮ່ວມງານພັດທະນາຕ່າງໆ. ແນວໃດກໍ່ຕາມ, ການເຮັດວຽກກັບໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງຂອງ ດີວີວີ ອິນເຕີເນເຊີນແນວ ເປັນປະສົບການທີ່ບໍ່ເຄີຍໄດ້ຮັບມາກ່ອນ. ມັນໄດ້ຊ່ວຍໃຫ້ລາວຮຽນຮູ້ຂະບວນການທີ່ເປັນມາດຕະຖານຫຼາຍຂຶ້ນ ເລີ່ມຈາກການທໍາຄວາມເຂົ້າໃຈຄວາມຕ້ອງການຂອງຜູ້ເຂົ້າຮ່ວມ ເພື່ອອອກແບບວາລະການຝຶກອົບຮົບ, ອອກແບບເນື້ອໃນການຝຶກອົບຮົມ, ວິທີການ, ການສາທິດ, ການປະຕິບັດ, ກອງປະຊຸມການຝຶກອົບຮົມຕົວຈິງ, ການສະທ້ອນ, ແລະ ການແນະນໍາ. ວັນເພັງ ໄດ້ແບ່ງປັນຂໍ້ມູນທີ່ສໍາຄັນນີ້ດ້ວຍຄວາມໝັ້ນໃຈ.

ນາງ ວັນເພັງ ເວົ້າຕື່ມອີກວ່າ: “ມັນໄດ້ມີການປ່ຽນແປງຢ່າງມີໄນຍະສໍາຄັນໃນການພັດທະນາຕົນເອງ ແລະ ແຮງຈູງໃຈ ເມື່ອທຽບກັບປະສົບການທີ່ຜ່ານມາຂອງຂ້ອຍ, ນີ້ບໍ່ພຽງແຕ່ແມ່ນຄວາມຈິງສໍາລັບຂ້ອຍເທົ່ານັ້ນ, ແຕ່ສໍາລັບເພື່ອນຮ່ວມງານຂອງຂ້ອຍ. ນາງ ນັນ ໄດ້ພັດທະນາທັກສະໃນການຝຶກອົບຮົມທີ່ມີປະສິດທິພາບແກ່ຜູ້ເຂົ້າຮ່ວມຂອງລາວ ທັງຢູ່ໃນສູນ ແລະ ໃນຫຼັກສູດການຝຶກຕ່າງໆ. ພວກເຮົາມຸ່ງໝັ້ນທີ່ຈະປະສົມປະສານທັກສະ ແລະ ຄວາມຮູ້ເຫຼົ່ານີ້ເຂົ້າໃນວຽກງານຂອງພວກເຮົາ, ເຖິງແມ່ນວ່າໂຄງການຈະສິ້ນສຸດລົງກໍ່ຕາມ” ວັນເພັງ ກ່າວເສີມ.

## ສະໜອງຫຼັກສູດການຝຶກອົບຮົມທີ່ມີປະສິດທິພາບໂດຍຜ່ານຄູຝຶກທີ່ມີຄວາມຊໍານິຊໍານານ

ໂຄງການດັ່ງກ່າວໄດ້ເສີມສ້າງຂີດຄວາມສາມາດຂອງຄູຝຶກຢ່າງຫຼວງຫຼາຍ, ຄູຝຶກດັ່ງກ່າວຈາກແຂວງຫຼວງພະບາງ, ຊຽງຂວາງ, ບໍລິຄໍາໄຊ, ຫົວພັນ ແລະ ສາລະວັນ. ສິ່ງດັ່ງກ່າວໄດ້ສົ່ງຜົນໃຫ້ມີການປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງຂອງຫຼັກສູດການຝຶກອົບຮົມຢ່າງຊັດເຈນ, ເຊິ່ງບັນລຸໄດ້ໂດຍການຫັນໃສ່ການປະສົມທິດສະດີ ແລະ ການປະຕິບັດຕົວຈິງເພື່ອສ້າງຄວາມອາດສາມາດຂອງຜູ້ເຂົ້າຮ່ວມ.

ການປ່ຽນແປງເຫຼົ່ານີ້ແມ່ນເຫັນໄດ້ຊັດເຈນໃນຄໍາຄິດເຫັນໃນທາງບວກຈາກຜູ້ເຂົ້າຮ່ວມ ແລະ ການແລກປ່ຽນຄວາມຮູ້ທີ່ເກີດຂຶ້ນພາຍໃນຊຸມຊົນຂອງພວກເຂົາ. ຜູ້ເຂົ້າຮ່ວມຫຼາຍຄົນໄດ້ປະກອບຄໍາຄິດຄໍາເຫັນກ່ຽວກັບການຝຶກອົບຮົມທີ່ມີການໂຕຕອບເຊິ່ງກັນ ແລະ ກັນ ແລະ ການມີສ່ວນຮ່ວມໃນການຝຶກອົບຮົມ, ໂດຍມີຜູ້ເຂົ້າຮ່ວມທ່ານໜຶ່ງຈາກແຂວງເປົ້າໝາຍເລົ່າວ່າ: “ຂ້ອຍໄດ້ເຂົ້າຮ່ວມການຝຶກອົບຮົມຫຼາຍຄັ້ງຢູ່ບ້ານຂອງຂ້ອຍ, ແຕ່ຂ້ອຍບໍ່ເຄີຍມີຄວາມມ່ວນຊື່ນ ແລະ ໄດ້ຮຽນຮູ້ຫຼາຍແບບນີ້ມາກ່ອນ. ຂ້ອຍມັກອັນນີ້ທີ່ສຸດເພາະຄູຝຶກໃຈດີ ແລະ ເກມມ່ວນໆ. ຂ້ອຍຈະແບ່ງປັນຄວາມມ່ວນ ແລະ ຄວາມຮູ້ທີ່ຂ້ອຍໄດ້ຮັບຈາກການຝຶກອົບຮົມກັບຫຼາຍໆຄົນໃນຊຸມຊົນຂອງຂ້ອຍ".





*ຊ້າຍ:* ຜູ້ເຂົ້າຮ່ວມເພດຍິງກໍາລັງມ່ວນກັບກິດຈະກໍາໃນລະຫວາງການຝຶກອົບຮົມ ທີ່ແຂວງບໍລິຄໍາໄຊ

*ຂວາ:* ວັນເພັງ ຄອນຸຈະເລີນ (ກາງ) ແລະ ຄູຝຶກຮ່ວມກໍາລັງສາທິດການຫຼິ້ນເກມໃຫ້ຜູ້ເຂົ້າຮ່ວມໄດ້ເຫັນ ທີ່ແຂວງບໍລິຄໍາໄຊ

# ປຶ້ມຄູ່ມືສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ

ກົມການສຶກສານອກໂຮງຮຽນ (ກສນ) ໂດຍການຮ່ວມມືກັບອົງການດີວີວີ ອິນເຕີເນຊັ່ນແນວ ໄດ້ດຳເນີນ ໂຄງການຝຶກອົບຮົມຄູຝຶກ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງຂຶ້ນນັບແຕ່ປີ 2021-2023. ເປົ້າໝາຍຂອງໂຄງການແມ່ນເພື່ອສ້າງຄູຝຶກໃນຫົວຂໍ້ສ້າງຄວາມເຂັ້ມແຂງແກ່ແມ່ຍິງໃນວຽກງານການສຶກສານອກໂຮງຮຽນ. ພ້ອມນັ້ນ ໃນໂຄງການຍັງໄດ້ສ້າງປຶ້ມຄູ່ມືໃຫ້ແກ່ຄູຝຶກ ເພື່ອເປັນແນວທາງໃນການຈັດການຝຶກອົບຮົມໃນຊຸມຊົນ ກໍຄືໃນວຽກງານຂອງຕົນ.

ປຶ້ມຄູ່ມືນີ້ປະກອບມີທັງໝົດ 4 ພາກ:
ພາກທີ I : ການຮຽນຮູ້ຕະຫຼອດຊີວິດ ແລະ ການຮຽນການສອນຜູ້ໃຫຍ່;
ພາກທີ II : ທັກສະສັງຄົມ (Soft Skills);
ພາກທີ III : ລະບົບການຮຽນຮູ້ ການປະຕິບັດຕົວຈິງ ດ້ານບົດບາດຍິງ-ຊາຍ (GALS);
ພາກທີ IV: ການສ້າງລາຍໄດ້ໃນຄອບຄົວ.

ປຶ້ມຄູ່ມືສະບັບນີ້ແມ່ນເນັ້ນໜັກພາກປະຕິບັດຕົວຈິງ ດັ່ງນັ້ນຈຶ່ງແນະນຳໃຫ້ຄູຝຶກຄົ້ນຄວ້າເນື້ອໃນເພີ່ມຕື່ມອີກ. ເນື່ອງຈາກວ່າຄູ່ມືນີ້ແມ່ນເປັນພຽງແນວທາງໃນການປະຕິບັດຕົວຈິງ, ດັ່ງນັ້ນຄູຝຶກຍັງສາມາດປັບປຸງກິດຈະກຳໄດ້ຕາມຄວາມເໝາະສົມ ອີງຕາມກຸ່ມເປົ້າໝາຍ ແລະ ສະພາບແວດລ້ອມຕົວຈິງຂອງຜູ້ເຂົ້າຮຽນ. ປຶ້ມຄູ່ມືນີ້ແມ່ນການຮິບໂຮມເອົາເນື້ອໃນຈາກພາກສ່ວນຕ່າງໆ ເພື່ອເປັນແນວທາງໃນການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໃນວຽກງານການສຶກສານອກ
ໂຮງຮຽນ. *ສາມາດ*
*ດາວໂຫຼດ ປຶ້ມໄດ້* *ທີ່ເວັບ*
*ໄຊ້* *www.* *dvv-*
*international.la*
*ຫຼື ສະແກນ ຄິວອາ* *ຂ້າງ*
*ລຸ່ມ.*




# ກອງປະຊຸມຕິດຕາມຜົນ CONFINTEA VII ລະດັບພາກພື້ນ: ການມີສ່ວນຮ່ວມຂອງ ASPBAE ແລະ ທັດສະນະຈາກອົງການຈັດຕັ້ງທາງສັງຄົມໃນອາຊີປາຊີຟິກ

*Helen Dabu*, ASPBAE

ວັນທີ 30 ພຶດສະພາ 2023, ສະຖາບັນການຮຽນຮູ້ຕະຫຼອດຊີວິດຂອງຢູເນສໂກ (UNESCO Institute for Lifelong Learning (UIL)) ແລະ ຫ້ອງການພາກພື້ນຈາກຫຼາຍຂະແໜງການຂອງອົງການຢູເນສໂກ ຢູ່ບາງກອກ, ປັກກິ່ງ, ຈາກາຕາ ແລະ ນິວເດລີ ໄດ້ຈັດກອງປະຊຸມຕິດຕາມຜົນ CONFINTEA VII ລະດັບພາກພື້ນອາຊີ ໃນຮູບແບບເໝືອນຈິງສຳລັບອາຊີ ເຊິ່ງເປັນສ່ວນໜຶ່ງຂອງຄວາມພະຍາຍາມໃນປະຕິບັດຕາມຄຳໝັ້ນສັນຍາ ທີ່ໄດ້ສ້າງຂຶ້ນໃນ CONFINTEA VII ທີ່ໄດ້ສ້າງເປັນຂອບປະຕິບັດງານມາຣາເກັດ (Marrakech Framework for Action (MFA)).

ກອງປະຊຸມລະຫວ່າງລັດຖະບານໃນລະດັບພາກພື້ນຄັ້ງນີ້ໄດ້ສະເໜີບັນດາບາດກ້າວສຳຄັນຢູ່ພາຍໃນພາກພື້ນ ໃນການດຶງດູດລັດຖະບານໃນອາຊີ-ປາຊີຟິກ ເພື່ອຂະຫຍາຍຄວາມພະຍາຍາມໃນການເຜີຍແຜ່ບັນດາຄຳໝັ້ນສັນຍາ CONFINTEA VII, ແລະ ພ້ອມທັງເນັ້ນໃຫ້ເຫັນບັນດາປະເດັນທີ່ສຳຄັນ ການດຳເນີນງານທີ່ໄດ້ເຮັດຢູ່ໃນ MFA ໂດຍສຸມໃສ່ນະໂຍບາຍ, ການສະໜອງທຶນ, ຂໍ້ກຳນົດ ແລະ ຄຸນນະພາບ ແລະ ການຄຸ້ມຄອງ, ເຊັ່ນດຽວກັນກັບການຕິດຕາມ ແລະ ການປະເມີນຜົນ. ກົນໄກຕິດຕາມຜົນຍັງໄດ້ປຶກສາຫາລືໃນຂັ້ນຕົ້ນເພື່ອຕິດຕາມຄວາມຄືບໜ້າທີ່ຈະໄດ້ຮັບ ແລະ ແລກປ່ຽນແນວທາງການປະຕິບັດທີ່ດີຢູ່ໃນພາກພື້ນ.

ສະມາຄົມອາຊີໃຕ້ປາຊີຟິກສຳລັບການສຶກສາຂັ້ນພື້ນຖານ ແລະ ຜູ້ໃຫຍ່ (ASPBAE), ເປັນຄູ່ຮ່ວມງານຈັດກອງປະຊຸມຕິດຕາມຜົນ CONFINTEA VII ລະດັບພາກພື້ນນີ້ ໄດ້ນຳສະເໜີ "ຂໍ້ສະເໜີແນະຂອງພາກອົງການຈັດຕັ້ງທາງສັງຄົມໃນການດຳເນີນການ ແລະ ການຕິດຕາມຂອງ CONFINTEA VII MFA" ໃນກອງປະຊຸມໃຫຍ່ ເຊິ່ງນຳສະເໜີທັດສະນະຂອງລັດຖະບານ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ກ່ຽວກັບການປະຕິບັດ MFA, ລວມທັງຂົງເຂດບູລິມະສິດ ແລະ ແນວທາງການປະຕິບັດທີ່ດີໃນພາກພື້ນ. ຜູ້ເຂົ້າຮ່ວມຫຼາຍກວ່າ 60 ທ່ານຈາກລັດຖະບານໃນພາກພື້ນ, ຫ້ອງການອະນຸພາກພື້ນຂອງຢູເນສໂກ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ, ລວມທັງອົງການຈັດຕັ້ງສັງຄົມ (CSOs) ເປັນຕົວແທນໂດຍ ASPBAE ແລະ ບາງສະມາຊິກ, ແລະ ຜູ້ຕາງໜ້າຈາກ ດີວີວີ ອິນເຕີເນຊັ່ນແນວ ຫ້ອງການປະຈຳພາກພື້ນອາຊີຕາເວັນອອກສຽງໃຕ້ ເຂົ້າຮ່ວມກອງປະຊຸມພາກພື້ນນີ້.

ໃນຖານະທີ່ເປັນສ່ວນໜຶ່ງຂອງແນວທາງການປະຕິບັດຂອງ ASPBAE ແລະ ເພື່ອຮັບປະກັນວ່າ ຂໍ້ມູນທີ່ໄດ້ຮັບໃນຂະບວນການ




ພາກພື້ນນີ້ ສະທ້ອນເຖິງທັດສະນະ ແລະ ຂໍ້ສະເໜີແນະຂອງ CSOs, ໂດຍສະເພາະແມ່ນບັນດາສະມາຊິກໃນພາກພື້ນອາຊີປາຊີຟິກ, ໄດ້ຈັດກອງປະຊຸມປຶກສາຫາລື CSO ເພື່ອກະກຽມກ່ອນກອງປະຊຸມໃຫຍ່ ໃນວັນທີ 23 ພຶດສະພາ 2023. ກອງປະຊຸມນີ້ໄດ້ລວມເອົາຜູ້ຕາງໜ້າຈາກສະມາຊິກຂອງ ASPBAE ເຊິ່ງປະກອບດ້ວຍຜູ້ສະໜັບສະໜູນ ແລະ ຜູ້ປະຕິບັດວຽກງານການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ (ALE) ຈາກບັນດາປະເທດໃນອາຊີໃຕ້, ອາຊີຕາເວັນອອກສຽງໃຕ້, ອາຊີຕາເວັນອອກ ແລະ ອາຊີກາງ. ຜົນໄດ້ຮັບຂອງກອງປະຊຸມປຶກສາຫາລື CSO ຄັ້ງນີ້ພ້ອມກັບບົດລາຍງານຂອງ CSO ກ່ຽວກັບ ALE ທີ່ພັດທະນາໂດຍສະມາຊິກຂອງ ASPBAE ໃນລະດັບປະເທດໄດ້ຖືກລວບລວມເປັນເອກະສານຂໍ້ສະເໜີແນະສະຫຼຸບທີ່ນຳສະເໜີໂດຍເລຂາທິການ ASPBAE ໃນກອງປະຊຸມຫຼັກໃນວັນທີ 30 ພຶດສະພາ ແລະ ຍັງໄດ້ຍື່ນສະເໜີ ເປັນລາຍລັກອັກສອນເຖິງ UIL ແລະ ຫ້ອງການ ຢູເນສໂກ ຫຼາຍຂະແໜງການໃນພາກພື້ນ.

ໂດຍຕົ້ນຕໍ, ຂໍ້ສະເໜີແນະຂອງ ASPBAE ໃນການປະຕິບັດຕາມຄຳໝັ້ນສັນຍາ CONFINTEA VII MFA ໃນພາກພື້ນ ນັ້ນກ່ຽວຂ້ອງໃນຫົວຂໍ້ສຳຄັນຂອງນະໂຍບາຍ ALE ແລະ ງົບປະມານແຫ່ງຊາດ; ຄວາມສະເໝີພາບ ແລະ ການບໍ່ແບ່ງແຍກ; ALE ແລະ ຄວາມສະເໝີພາບດ້ານດີຈີຕອນ, ການຮູ້ໜັງສື ແລະ ຄວາມເປັນພົນລະເມືອງ; ການສົ່ງມອບ ແລະ ການສະໜອງ ALE ທີ່ມີຄຸນນະພາບ; ການຄຸ້ມຄອງ ແລະ ລະບົບ ALE; ກົນໄກການຕິດຕາມ ແລະ ຄວາມຮັບຜິດຊອບຂອງ MFA ແລະ; ຊຸກຍູ້ແນວທາງການປະຕິບັດທີ່ດີຈາກບັນດາປະເທດໃນພາກພື້ນອາຊີປາຊີຟິກ.

ອີກສິ່ງໜຶ່ງທີ່ສຳຄັນ, ASPBAE ເນັ້ນໜັກວ່າລັດຖະບານຕ້ອງອອກນິຕິກຳ ແລະ ນະໂຍບາຍທີ່ຄອບຄຸມກ່ຽວກັບ ALE ໃນຖານະເປັນສິດທິໃນຂອບການຮຽນຮູ້ຕະຫຼອດຊີວິດ, ດ້ວຍການມີສ່ວນຮ່ວມຂອງ CSOs ແລະ ຜູ້ມີສ່ວນຮ່ວມ ALE ອື່ນໆ. ກົດໝາຍແຫ່ງຊາດຄວນປະຕິບັດຕາມຫຼັກເກນ ແລະ ແນວທາງການປະຕິບັດທີ່ຈະແຈ້ງ, ກຳນົດບົດບາດສະເພາະຂອງລັດຖະບານແຫ່ງຊາດ ແລະ ທ້ອງຖິ່ນ ແລະ ໂດຍມີນະໂຍບາຍການຈັດແບ່ງງົບປະມານປະຈຳປີທີ່ສະເພາະເຈາະຈົງຈາກລັດຖະບານແຫ່ງຊາດ ຫຼື ສູນກາງ.

ນອກນີ້ຍັງໄດ້ຮຽກຮ້ອງໃຫ້ປະເທດຕ່າງໆ ຊຸກຍູ້ການຊ່ວຍເຫຼືອ ແລະ ໃຫ້ການສະໜັບສະໜູນດ້ານງົບປະມານໃຫ້ແກ່ສູນການຮຽນຮູ້ຊຸມຊົນ, ຜູ້ຮຽນ, ພໍ່ແມ່, ສະມາຊິກໃນຄອບຄົວ ແລະ ຊຸມຊົນ ຕ້ອງສາມາດເຂົ້າເຖິງການຮຽນຮູ້ໂດຍຊຸມຊົນ, ການສຶກສາທີ່ຄຳນຶງເຖິງທັກສະບົດບາດຍິງ-ຊາຍ, ໂຄງການການຮູ້ໜັງສືຂອງຄອບຄົວ, ສູນການອ່ານ ແລະ ໂຄງການອື່ນໆ ທີ່ສົ່ງເສີມການຮຽນຮູ້ລະຫວ່າງລຸ້ນຄົນ ແລະ ສະໜັບສະໜູນຄວາມຕໍ່ເນື່ອງຂອງການຮຽນຮູ້, ໂດຍສະເພາະດ້ານສຸຂະພາບຈິດ, ອາຫານ ແລະ ໂພຊະນາການ ແລະ ຄວາມພະຍາຍາມໃນການຟື້ນຟູຊຸມຊົນ.

ໂດຍການຫຼິງເຫັນການກ້າວໄປສູ່ການຫັນເປັນດີຈີຕອນຢ່າງໄວວາຢູ່ຫຼາຍປະເທດໃນພາກພື້ນ, ASPBAE ໄດ້ເນັ້ນໜັກວ່າລະບົບການສຶກສາຄວນກຳນົດໃຫ້ມີການດຳເນີນການ ເພື່ອຮັບປະກັນການເຂົ້າເຖິງການສຶກສາຫຼາຍພາສາ ແລະ ຄວາມຮູ້ກ່ຽວກັບດີຈີຕອນສຳລັບຄອບຄົວ, ໂດຍສະເພາະໃນເຂດຊົນນະບົດຫ່າງໄກສອກຫຼີກ ແລະ ຊຸມຊົນດ້ອຍໂອກາດອື່ນໆ.

ແລະເພື່ອຮັບປະກັນວ່າຄຳໝັ້ນສັນຍາຂອງ CONFINTEA VII MFA ຈະຖືກປະຕິບັດ, ASPBAE ໄດ້ຮຽກຮ້ອງໃຫ້ມີຂະບວນການເຜີຍແຜ່ຂໍ້ມູນຂ່າວສານຢ່າງກວ້າງຂວາງຈາກທ້ອງຖິ່ນໄປຈົນເຖິງລະດັບຊາດກ່ຽວກັບບົດບາດ ALE ໃນລະດັບປະເທດ, ແລະ ເລີ່ມຕົ້ນໃນລະດັບປະເທດ ແລະ ບັນດາພາກສ່ວນກ່ຽວຂ້ອງໃນຂະບວນຂອງການສ້າງແຜນປະຕິບັດງານສຳລັບ ALE ແລະ ການປະຕິບັດ MFA ທີ່ກຳນົດເປົ້າໝາຍທີ່ຊັດເຈນຂອງປະເທດທັງດ້ານງົບປະມານ ແລະ ກຳນົດຕົວຊີ້ວັດເພື່ອຕິດຕາມຄວາມຄືບໜ້າ. ສິ່ງເຫຼົ່ານີ້ຄວນມີການຮັບປະກັນການມີສ່ວນຮ່ວມຂອງ CSOs ແລະ ຜູ້ມີສ່ວນກ່ຽວຂ້ອງທີ່ສຳຄັນອື່ນໆ ໃນການກຳນົດຂົງເຂດບູລິມະສິດ ແລະ ແຜນປະຕິບັດງານ. ເພື່ອໃຫ້ເຂົ້າເຖິງ ແລະ ໄດ້ຮັບການສະໜັບສະໜູນທີ່ກວ້າງຂວາງ, MFA ແລະ ຂອບການປະຕິບັດຂອງແຕ່ລະປະເທດຄວນຈະຖືກແປເປັນພາສາຂອງທ້ອງຖິ່ນ. ການສ້າງຂີດຄວາມສາມາດຂອງລັດຖະບານທ້ອງຖິ່ນ, CSOs ແລະ ພາກສ່ວນກ່ຽວຂ້ອງອື່ນໆ ໃນການເຮັດໃຫ້ MFA ກາຍເປັນນະໂຍບາຍ, ງົບປະມານ ແລະ ແຜນງານຕ່າງໆ ເຊິ່ງມີຄວາມສຳຄັນຫຼາຍໃນໄລຍະຕໍ່ໄປ.

ທ້າຍສຸດ, ASPBAE ໄດ້ເນັ້ນໜັກວ່າບັນຫາຕ່າງໆ ເຊັ່ນການປ່ຽນແປງດິນຟ້າອາກາດ, ການອົບພະຍົບ ແລະ ວິກິດການຜູ້ລີ້ໄພ, ຄວາມຂັດແຍ່ງ ແລະ ໄພພິບັດ ຈຳເປັນຕ້ອງໄດ້ຮັບການການຮ່ວມມືກັບສາກົນ. ດັ່ງນັ້ນ, ມັນໄດ້ຮຽກຮ້ອງໃຫ້ບັນດາປະເທດສະມາຊິກກຳນົດວາລະກອງປະຊຸມ ALE ລະດັບພາກພື້ນ ແລະ ແຜນການຮ່ວມມືທີ່ຊັດເຈນເພື່ອທີ່ຈະຈັດໃຫ້ມີການສະໜອງການຮຽນຮູ້ ແລະ ໂອກາດ ໃນປະເທດທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ, ປະເທດທີ່ເປັນເກາະຂະໜາດນ້ອຍ, ປະເທດກຳລັງພັດທະນາ ແລະ ປະເທດດ້ອຍພັດທະນາ.

ເນື່ອງຈາກຄວາມພະຍາຍາມໃນການຕິດຕາມຂອງ CONFINTEA VII ນີ້ເປັນພຽງແຕ່ບາດກ້າວເລີ່ມຕົ້ນ, ASPBAE ຮ່ວມກັບສະມາຊິກຂອງຕົນ, ຢືນຢັນຄຳໝັ້ນສັນຍາຂອງໃນການຮັກສາການມີສ່ວນຮ່ວມ ແລະ ປະກອບສ່ວນຢ່າງຫ້າວຫັນ ໃນຂະບວນການເຫຼົ່ານີ້. ໂດຍຈະສືບຕໍ່ເຮັດວຽກຮ່ວມມືກັບ CSOs ໃນລະດັບຊາດ, ພາກພື້ນ ແລະ ທົ່ວໂລກ ເພື່ອສະໜັບສະໜູນວາລະ ALE ທີ່ມີຄວາມທະເຍີທະຍານຫຼາຍຂຶ້ນ, ຄວາມຍຸຕິທຳທາງເພດ, ປະຢັດເພື່ອສະພາບດິນຟ້າອາກາດ ແລະ ລວມເຖິງຕາມທີ່ໄດ້ກຳນົດຜ່ານຂອບການດຳເນີນງານຂອງມາຣາເກັດ.

# ສະຖາບັນພາກລັດ ແລະ ຄູ່ຮ່ວມພັດທະນາ ໄດ້ຈັດກອງປະຊຸມການຮຽນຮູ້ຕະຫຼອດຊີວິດເພື່ອເກັບກຳຂໍ້ມູນ

*Vanna Poeu,* DVV International, ກຳປູເຈຍ

ກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ (MoEYS) ສົມທົບກັບບັນດາຄູ່ຮ່ວມພັດທະນາ ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບຮ່າງແຜນປະຕິບັດງານການເຄື່ອນໄຫວນະໂຍບາຍການຮຽນຮູ້ຕະຫຼອດຊີວິດແຫ່ງຊາດ. ກອງປະຊຸມດັ່ງກ່າວມີຈຸດປະສົງເພື່ອແນໃສ່ລວບລວມຂໍ້ມູນຂ່າວສານ ແລະ ອຳນວຍຄວາມສະດວກໃນການແລກປ່ຽນກ່ຽວກັບບັນດາເປົ້າໝາຍຍຸດທະສາດ ແລະ ບັນດາກິດຈະກຳການເຄື່ອນໄຫວທີ່ບັນດາກະຊວງ/ສະຖາບັນສາມາດປະຕິບັດໄດ້.

ກອງປະຊຸມໄດ້ດຳເນີນໃນວັນທີ 28 ກໍລະກົດ 2023 ໂດຍກອງເລຂາຄະນະກຳມາທິການແຫ່ງຊາດເພື່ອການຮຽນຮູ້ຕະຫຼອດຊີວິດຂອງກະຊວງການຕ່າງປະເທດ ພາຍໃຕ້ການສະໜັບສະໜູນຂອງ ດີວີວີ ອິນເຕີເນເຊິນແນວ.

ກອງປະຊຸມຄັ້ງນີ້ໄດ້ຮັບການເຂົ້າຮ່ວມຂອງ ພະນະທ່ານ ໂນສ ເສເລ (Nos Sles) Secretary of State, ຕາງໜ້າຈາກ MoEYS ແລະຮອງຜູ້ອຳນວຍການຄະນະກຳມາທິການເພື່ອການຮຽນຮູ້ຕະຫຼອດຊີວິດແຫ່ງຊາດ (NCLL) ພ້ອມດ້ວຍທ່ານສາດສະດາຈານ ເຈີມ ເກດລິຕີ (Chhem Keat Rithy), ຜູ້ແທນລັດຖະມົນຕີປະຈຳສຳນັກງານນາຍົກ ແລະ Secretary of State, ຕາງໜ້າຈາກກະຊວງອຸດສະຫະກຳ, ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ແລະ ຄະນະກຳມາທິການຂອງ NCLL, MoEYS.

ຈຸດປະສົງຂອງກອງປະຊຸມສຳຄັນໃນຄັ້ງນີ້ ແມ່ນເພື່ອເປັນການສົ່ງເສີມຄວາມເຂົ້າໃຈກ່ຽວກັບນະໂຍບາຍແຫ່ງຊາດ, ປຶກສາຫາລືກ່ຽວກັບຮ່າງແຜນປະຕິບັດງານ ແລະ ທົບທວນຄືນເປົ້າໝາຍຍຸດທະສາດ ແລະ ການເຄື່ອນໄຫວຕົ້ນຕໍ ໃຫ້ມີຄວາມກົມກຽວກັນ ແລະ ກຳນົດການເຄື່ອນໄຫວຂອງກະຊວງ/ສະຖາບັນທີ່ກ່ຽວຂ້ອງເພື່ອດຳເນີນການຕາມຂັ້ນຕອນ ເພື່ອບັນລຸເປົ້າໝາຍທີ່ຕັ້ງໄວ້.

ໃນໂອກາດກ່າວເປີດກອງປະຊຸມ, ທ່ານ Nos Sles ເຫັນວ່າກອງປະຊຸມຄັ້ງນີ້ ມີຄວາມໝາຍຄວາມສຳຄັນຫຼາຍ ຕໍ່ກັບການປຶກສາຫາລືກ່ຽວກັບການກຳນົດບັນດາປັດໄຈນຳເຂົ້າທີ່ສຳຄັນ ເພື່ອກຳນົດເປົ້າໝາຍ ແລະ ກິດຈະກຳຍຸດທະສາດຕົວຈິງ ໃຫ້ແທດເໝາະກັບກຸ່ມເປົ້າໝາຍ ທີ່ຈະໄດ້ຮັບຜົນປະໂຫຍດຈາກນະໂຍບາຍແຫ່ງຊາດການຮຽນຮູ້ຕະຫຼອດຊີວິດ.

ພ້ອມດຽວກັນນີ້, ທ່ານຍັງໄດ້ຂອບໃຈຢ່າງເລິກເຊິ່ງຕໍ່ບັນດາຜູ້ໃຫ້ທຶນຈາກກະຊວງທີ່ກ່ຽວຂ້ອງ, ອົງການ ຢູເນສໂກ, ດີວີວີ ອິນເຕີເນເຊິນແນວ ແລະ ຄູ່ຮ່ວມພັດທະນາອື່ນໆ ທີ່ໄດ້ປະກອບສ່ວນເຂົ້າໃນການຜັນຂະຫຍາຍແນວທາງນະໂຍບາຍການຮຽນ-ການສອນຕະຫຼອດຊີວິດແຫ່ງຊາດໃນໄລຍະຜ່ານມາ.

ກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ ໄດ້ເນັ້ນໜັກວ່າ: ການຮຽນຮູ້ຕະຫຼອດຊີວິດກາຍເປັນປະເດັນສຳຄັນຂອງການສຶກສາ ແລະ ເປັນເຄື່ອງມືທີ່ມີປະໂຫຍດເພື່ອໄດ້ຮັບອິດສະຫຼະພາບ, ຄວາມສຸກ ແລະ ຕອບສະໜອງຕໍ່ການປ່ຽນແປງຂອງຄວາມຕ້ອງການຂອງຕະຫຼາດ, ໂດຍສະເພາະແມ່ນຄວາມຕ້ອງການຂອງພົນລະເມືອງທຸກຄົນໃນທຸກສະຖານະການ ທີ່ນຳໃຊ້ໃນຕະຫຼອດຊີວິດຂອງມະນຸດເພື່ອພັດທະນາທັກສະວິຊາສະເພາະ ແລະ ທັກສະຊີວິດ ເພື່ອໃຫ້ປະຊາຊົນກາຍເປັນພົນລະເມືອງດີ ແລະ ດຳລົງຊີວິດຮ່ວມກັນຢ່າງສະຫງົບສຸກ ແລະ ສາມັກຄີໃນສັງຄົມ.



# ຕໍ່າຫູກການຮຽນຮູ້ຕະຫຼອດຊີວິດຂອງສູນການຮຽນຮູ້

*Chiara D'Urso,* DVV International, ລາວ

ໃນລະຫວ່າງການເກັບກ່ຽວປະສົບການຝຶກງານທີ່ ຢູ່ຫ້ອງການ ດີວີວີ ອິນເຕີເນເຊີນແນວ ປະຈຳ ສປປ ລາວ, ຂ້ອຍໄດ້ມີໂອກາດໄປເຮັດວຽກພາກສະໜາມເປັນເວລາໜຶ່ງອາທິດ, ເພື່ອຮຽນຮູ້ກ່ຽວກັບໂຄງການທີ່ພວມດຳເນີນຢູ່ເມືອງນອງ ແລະ ເຊໂປນ ເຊິ່ງມີເປົ້າໝາຍແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ສູນການຮຽນຮູ້ຊຸມຊົນ (ສຮຊ) ໂດຍສະເພາະແມ່ນກິດຈະກຳການສ້າງລາຍຮັບແກ່ສຳລັບແມ່ຍິງໃນຊຸມຊົນ, ແຕ່ຍັງເປີດໂອກາດໃຫ້ສຳລັບຊາວໜຸ່ມ ແລະ ເດັກນ້ອຍ.

ໃນຕອນເຊົ້າຂອງວັນສຸກທີ 14 ຕຸລາ 2022, ຮ່ວມກັບຜູ້ບໍລິຫານໂຄງການຊ່ຽວຊານຂອງ ດີວີວີ ເອື້ອຍດອກຄຳ, ອ້າຍວິລະ ແລະ ຄູຝຶກ 2 ທ່ານ - ເຊິ່ງເປັນຜູ້ຊ່ຽວຊານດ້ານຫັດຖະກຳຈັກສານໄມ້ໄຜ່, ຈາກນະຄອນຫຼວງ ວຽງຈັນເຮົາເດີນທາງມຸ່ງໜ້າໄປຍັງຈຸດໝາຍປາຍທາງໃນຕອນໃຕ້ຂອງລາວ ສູ່ເມືອງນອງ ແລະ ເມືອງເຊໂປນ ທີ່ຕັ້ງຢູ່ແຂວງສະຫວັນນະເຂດ. ເຖິງແມ່ນວ່າ ຂ້ອຍໄດ້ຮັບການຂັບເຄື່ອນດ້ວຍຄວາມປາຖະໜາທີ່ໜ້າ ປະຫຼາດໃຈໂດຍປະສົບນັ້ນ, ແຕ່ກໍ່ມີຄວາມຄາດຫວັງພິເສດບາງຢ່າງໄດ້ເກີດຂຶ້ນ. ແນວໃດກໍ່ຕາມ, ຂ້ອຍແນ່ໃຈວ່າມັນຈະຕ້ອງສ້າງຄວາມປະທັບໃຈຂ້ອຍຢ່າງທີ່ບໍ່ເຄີຍມີມາກ່ອນ. ຂ້ອຍຮູ້ວ່າຂ້ອຍຄົງຈະໄດ້ພົບກັບຄົນຊົນເຜົ່າທີ່ອາໄສຢູ່ບ້ານຫ່າງໄກສອກຫຼີກ, ສຳຜັດທຳມະຊາດທີ່ໜ້າຕື່ນຕາຕື່ນໃຈ, ສະນັ້ນ, ການ ປັບຕົວ ແລະ ຢາກຮູ້ຢາກເຫັນສາມາດກະຕຸ້ນແນວຄິດໃນທາງບວກ ເພື່ອໃຫ້ເພີດເພີນໄປກັບທຸກຊ່ວງເວລາທີ່ເປັນເອກະລັກສະເພາະທີ່ບໍ່ສາມາດລືມໄດ້.

ຂ້ອຍໄດ້ໄປຢ້ຽມຢາມ ສູນການສຶກສານອກໂຮງຮຽນເມືອງເຊໂປນ ແລະ ໄດ້ພົບກັບທີມງານຂອງສູນພັດທະນາການສຶກສານອກໂຮງຮຽນ ແລະ ຊາວໜຸ່ມເມືອງ. ຄວາມລຽບງ່າຍເປັນລັກສະນະສະເພາະຂອງປະເທດລາວ ກໍ່ຄືການຕ້ອນຮັບອັນອົບອຸ່ນສຳລັບຄົນຕ່າງປະເທດ. ແນວໃດກໍ່ຕາມ, ດີວີວີ ໄດ້ຈັດຝຶກອົບຮົມກ່ຽວກັບຫັດຖະກຳຕໍ່າຜ້າ, ເພື່ອສະແດງໃຫ້ຜູ້ຕາງໜ້າໃນຂັ້ນທ້ອງຖິ່ນໄດ້ຮັບຮູ້ເຖິງຄວາມສຳຄັນຂອງ ການຮຽນຮູ້ຕະຫຼອດຊີວິດ ສຳລັບທຸກຄົນ, ການສ້າງຂີດຄວາມສາມາດ ແລະສ້າງທີມງານຜູ້ຮັບຜິດຊອບໃນຂັ້ນເມືອງ, ສຳລັບອົງການຄູ່ຮ່ວມພັດທະນາ (ສູນກາງຊາວໜຸ່ມ, ສະຫະພັນແມ່ຍິງ ໃນຂັ້ນທ້ອງຖິ່ນ) ແລະ ດີວີວີ. ສຳລັບຊາວບ້ານໃນທ້ອງຖິ່ນມີໂອກາດໃນການພັດທະນາ ແລະ ຝຶກທັກສະໃຫ້ເກັ່ງຂຶ້ນເພື່ອສ້າງລາຍຮັບໃໝ່.



ເອື້ອຍດອກຄຳ, ຂ້ອຍ ແລະ ຕາງໜ້າ ພະແນກ ສຶກສາທິການ ແລະ ກິລາເມືອງ ລົງຢ້ຽມ ສຮຊ

ຄວາມຈິງແລ້ວ, ບັນຫາທີ່ເມືອງເຫຼົ່ານີ້ພວມປະເຊີນໜ້າຢູ່ລວມມີ: ການຊອກຫາວິທີໃໝ່ໃນການສະໜັບສະໜູນຊາວບ້ານແບບຍືນຍົງ ແລະ ສິ່ງເສີມເທດສະບານທ້ອງຖິ່ນ ເພື່ອຊອກຫາແຫຼ່ງທຶນດ້ານເສດຖະກິດເພື່ອປະຕິບັດບັນດາໂຄງການດ້ວຍຕົນເອງ. ຈົນຮອດປະຈຸບັນ, ດີວີວີ ລາວ ໄດ້ສ້າງຫຼາຍໂຄງການການຮຽນຮູ້ຕະຫຼອດຊີວິດ ແລະ ເປັນເວລາຍາວນານ, ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນໃຫ້ເກີດດອກອອກຜົນ, ໂດຍມີຈຸດປະສົງເພື່ອໃຫ້ເຂົາເຈົ້າສາມາດດຳເນີນການເອງໄດ້ຢ່າງເອກະລາດໃນອະນາຄົດ, ເຊິ່ງຈະກໍ່ໃຫ້ເກີດຄວາມແຕກຕ່າງອັນໃຫຍ່ຫຼວງໃນເສັ້ນທາງຊີວິດຂອງທຸກໆ ຄົນ.

ແນ່ນອນວ່າ, ຫົວຂໍ້ຍ່ອຍທີ່ໄດ້ຮັບການພິຈາລະນາຄວາມສຳຄັນຂອງການໃຊ້ປະໂຫຍດຂອງຊັບພະຍາກອນທີ່ມີຢູ່ໃນປະຈຸບັນເພື່ອຖ່າຍທອດຄວາມຊຳນານນີ້ໃຫ້ແກ່ປະຊາຊົນໃນທ້ອງຖິ່ນ, ໂດຍຄຳນຶງເຖິງຄວາມມຸ່ງຫວັງ, ຄວາມສາມາດ ແລະ ກຳລັງແຮງຂອງຄົນລຸ້ນໃໝ່. ເປົ້າໝາຍທີ່ຢາກເພື່ອບັນລຸ, ພິຈາລະນາຄວາມເປັນຈິງດ້ານເສດຖະກິດ-ສັງຄົມ, ແຕ່ກໍ່ບໍ່ແມ່ນວ່າຈະເປັນໄປບໍ່ໄດ້: ໃນຫຼາຍໂອກາດ, ແຮ່ງໜ້ອຍແຮ່ງຫຼາຍຂຶ້ນ ແລະ ເມື່ອຮ່ວມມືກັນເຮົາຈະເຂັ້ມແຂງ.

ໃນຂະນະທີ່ການຝຶກອົບຮົມການສານໄມ້ໄຜ່ດຳເນີນໄປເປັນເວລາໜຶ່ງອາທິດເຕັມ, ຂ້ອຍໄດ້ໄປຢ້ຽມຢາມ ບ້ານເປົ້າທີ່ແຕກຕ່າງກັນສີ່ແຫ່ງ, ແຕ່ລະໝູ່ບ້ານແມ່ນມີກິດຈະກຳ ແລະ ຈຸດປະສົງທີ່ແຕກຕ່າງກັນ.

ບ້ານທຳອິດ, ແມ່ນເດີນທາງໄປຍາກຫຼາຍ ດ້ວຍສະພາບທາງເຂົ້າທີ່ບໍ່ເອື້ອອຳນວຍ. ຂ້ອຍໄດ້ຮັບຮູ້ຢ່າງຈະແຈ້ງວ່າຖ້າຫາກຈະຫາດຳລົງຊີວິດໃນບ້ານເຫຼົ່ານີ້, ບໍ່ວ່າຈະມີຄວາມທ້າທາຍອັນໃດກໍ່ຕາມ, ມີຄວາມຈຳເປັນຫຼາຍໃນການດຳເນີນການ ເພື່ອຕອບສະໜອງໃຫ້ໄດ້ຕາມຄວາມຕ້ອງການຂອງບ້ານ. ຢ່າງໃດກໍ່ຕາມ, ມັນເປັນມື້ທີ່ມີຝົນຕົກເລັກນ້ອຍ ແລະ ພວກເຮົາໄດ້ມາຮອດບ້ານລະກຶມ ຂອງເມືອງເຊໂປນ, ເຊິ່ງມີ ສຮຊ ຕັ້ງຢູ່ທີ່ພ້ອມໃຫ້ຊາວບ້ານນຳໃຊ້ເພື່ອຮຽນຮູ້ ແລະ ແບ່ງປັນທັກສະຂອງເຂົາເຈົ້າ. ແທ້ຈິງແລ້ວ, ເຂົາເຈົ້າໄດ້ຮຽນຮູ້ການອ່ານ ແລະ ຂຽນ, ມີທັກສະການຝຶກອົບຮົມພື້ນຖານໃນການໃຊ້ຈັກຫຍິບເຄື່ອງ, ການຈັກສານເຄື່ອງຫັດຖະກຳດ້ວຍໄມ້ໄຜ່ພື້ນເມືອງ; ໃນແງ່ຂອງການສ້າງຄວາມເຂັ້ມແຂງນີ້ມັນໄດ້ຊຸກຍູ້ໃຫ້ມີການການເຕີບໂຕທາງດ້ານເສດຖະກິດຂອງແມ່ຍິງເອງ. ແນ່ນອນວ່າ, ການສະໜອງອຸປະກອນສາມາດສ້າງການປ່ຽນແປງໃນຊີວິດຂອງເຂົາເຈົ້າ, ໂດຍການພັດທະນາວິທີການສ້າງລາຍຮັບຮູບແບບໃໝ່ທີ່ສະຫຼາດ ແລະ ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ. ນອກຈາກນີ້, ການເຊື່ອມໂຍງຂອງ ສຮຊ ໄດ້ເປີດໂອກາດໃຫ້ມີການແລກປ່ຽນກັບບ້ານອື່ນໆ.

ຂ້າພະເຈົ້າໄດ້ສຳພາດເດັກຍິງບາງຄົນທີ່ຫຍິບຜ້າ, ໂດຍຖາມກ່ຽວກັບຄວາມຮູ້ສຶກ, ຄວາມຝັນ ແລະ ການສະໜັບສະໜູນຈາກຄອບຄົວ. ຄວາມເຂີນອາຍ, ເວລາທີ່ສັ້ນ ແລະ ທັດສະນະທີ່ບໍ່ຊັດເຈນສຳລັບອະນາຄົດຂອງພວກເຂົາ ເຮັດໃຫ້ໄດ້ຄຳຕອບທີ່ຄ້າຍຄືກັນ



ຂ້ອຍ ແລະ ຊາວບ້ານລະກຶມໃນລະຫວ່າງການຝຶກອົບຮົມທີ່ເມືອງເຊໂປນ.



ສິ້ນມີ່ໄດ້ຕ່ຳຢູ່ໃນໝູ່ບ້ານ ໃນເມືອງເຊໂປນ.

ເລັກນ້ອຍ, ໂດຍຖືວ່າຄວາມຄິດທີ່ບໍ່ຊັດເຈນ ແລະ ຄວາມມັກໃນກິດຈະກຳເຫຼົ່ານັ້ນ, ເປັນວຽກໃນຝັນຂອງພວກເຂົາ. ພາຍຫຼັງການໄປຢ້ຽມຢາມຂອງພວກເຮົາ, ເດັກຍິງໜຸ່ມ 15 ຄົນຈາກບ້ານລະກຶມ ໄດ້ມາທີ່ສູນການສຶກສານອກໂຮງຮຽນເມືອງເຊໂປນ ເປັນເວລາ 3 ມື້ ເພື່ອຝຶກທັກສະໃນການສານກະເປົາໄມ້ໄຜ່ ແລະ ອອກແບບການຕັດຫຍິບທີ່ສ້າງສັນ. ໃນລະຫວ່າງການຢ້ຽມຢາມບ້ານໃນຄັ້ງທຳອິດ, ຄວາມຢາກຮູ້ຢາກເຫັນແມ່ນພຽງຄວາມຮູ້ສຶກທົ່ວໄປລະຫວ່າງຂ້ອຍກັບຄົນທ້ອງຖິ່ນ ທີ່ເຫັນຄວາມເຂີນອາຍ ແລະ ປະຫຼາດໃຈ.

ແນວໃດກໍ່ຕາມ, ຄວາມຍິນດີ ແລະ ດີໃຈທີ່ໄດ້ພົບກັນຕາມລຳດັບ, ພວກເຮົາຈຶ່ງອອກເດີນທາງກັບຄືນໄປສູນການສຶກສານອກໂຮງຮຽນເມືອງເຊໂປນ. ໃນບໍລິບົດນີ້, ຂ້ອຍຍັງໄດ້ພັດທະນາທັກສະໃນການສານເຄື່ອງຫັດຖະກຳດ້ວຍໄມ້ໄຜ່. ເປັນສິ່ງທີ່ທ້າທາຍຫຼາຍ: ຍ້ອນອຸປະສັກດ້ານພາສາ, ການປະສານເອົາພາກສ່ວນຕ່າງໆມາປະກອບກັນເປັນໜຶ່ງດຽວແມ່ນຕ້ອງໄດ້ໃຊ້ຄວາມພະຍາຍາມຫຼາຍ, ແຕ່ກໍ່ຜ່ອນຄາຍ ແລະ ຄຸ້ມຄ່າ. ໂດຍສ່ວນຕົວແລ້ວ, ການຮຽນຮູ້ຕະຫຼອດຊີວິດມີຄວາມໝາຍທີ່ບໍ່ສິ້ນສຸດ, ບໍ່ມີຂອບເຂດໃນການສັງເກດການ ແລະ ການປະຍຸກໃຊ້, ມັນສະໜອງໂອກາດໃນການປັບຕົວ, ການຮຽນຮູ້ເພື່ອ ແລະ ຈາກມະນຸດທຸກຄົນ.

ບໍ່ແມ່ນທ້າຍສຸດ, ໄມ້ໄຜ່ຖືກນຳໃຊ້ຢ່າງກວ້າງຂວາງໃນຊຸມຊົນລາວ, ເປັນພືດຊະນິດໜຶ່ງທີ່ແຂງແຮງທີ່ສຸດໃນໂລກ. ໃນບ້ານ, ເຂົາເຈົ້າເຮັດເຮືອນຈາກໄມ້ໄຜ່, ທັງໃຊ້ເປັນເຄື່ອງມື ແລະ ກິນ.

ນອກຈາກນີ້, ໂຄງການດັ່ງກ່າວມີຈຸດປະສົງເພື່ອສົ່ງເສີມແມ່ຍິງໃນການສ້າງລາຍຮັບ ຈາກການນຳຄວາມສາມາດທີ່ແຕກຕ່າງກັນໄປໃຊ້. ດັ່ງນັ້ນໃນບ້ານເຫຼົ່ານີ້, ກິດຈະກຳຫຼັກແມ່ນການຕ່ຳຫູກ, ເພື່ອຜະລິດຜ້າຝ້າຍທີ່ສວຍງາມ, ສິ້ນແພພື້ນເມືອງທີ່ຮຽກວ່າສິ້ນ. ໂດຍທົ່ວໄປແລ້ວ, ຄົນລາວຮູ້ຈັກວິທີຕ່ຳຫູກແຕ່ອາຍຸຍັງນ້ອຍ, ຍ້ອນວ່າການຕ່ຳຫູກແມ່ນທັກສະທີ່ຈຳເປັນສຳລັບແມ່ຍິງທຸກຄົນ ເພື່ອອວດອ້າງຄວາມມີສິລະປະ ແລະ ຄວາມຊຳນິຊຳນານຂອງເຂົາເຈົ້າ. ດັ່ງນັ້ນ, ບ້ານເຫຼົ່ານີ້ຈຶ່ງໄດ້ມີການຈັດຕັ້ງປະຕິບັດກິດຈະກຳການຕ່ຳຫູກ ແລະ ທຸກຄົນກໍ່ມີຄວາມຕັ້ງໃຈໃນການຮຽນຮູ້. ສຳລັບຕົວຢ່າງ, ຂະບວນການຕ່ຳ "ສິ້ນ" ທີ່ເຮັດດ້ວຍຝ້າຍ, ໃຊ້ເວລາປະມານໜຶ່ງອາທິດ.

ຈຸດເດັ່ນຂອງເສື້ອຜ້າຊົນເຜົ່າ ແມ່ນລວດລາຍ ສີສັນທີ່ສົດໃສ ແລະ ສວຍງາມ ການຈົກລາຍທີ່ເປັນເອກະລັກ ແລະ ລະອຽດອ່ອນ. ສີສັນ ແລະ ລວດລາຍທີ່ແຕກຕ່າງກັນສະທ້ອນໃຫ້ເຫັນເຖິງວັດທະນະທຳຊົນເຜົ່າ, ວັດທະນະທຳລາວ, ການພົວພັນທາງສັງຄົມ ແລະ ຄວາມເຊື່ອຂອງແຕ່ລະຊຸມຊົນ.

ຢ່າງໃດກໍ່ຕາມ, ແຕ່ລະບ້ານມີໂຄງການຝຶກອົບຮົມທີ່ແຕກຕ່າງກັນໄປຂຶ້ນກັບຄວາມຕ້ອງການຂອງຊຸມຊົນ. ຕົວຢ່າງ, ມີບ້ານໜຶ່ງທີ່ເດັກນ້ອຍໄດ້ເຫັນເຖິງຄວາມສຳຄັນຂອງໂພຊະນາການທີ່ດີຕໍ່ສຸຂະພາບ. ຜູ້ໃຫຍ່ໄດ້ຮັບການຝຶກອົບຮົມປຸງແຕ່ງອາຫານ ແລະ ການກຽມອາຫານທີ່ມີຄຸນຄ່າທາງໂພຊະນາການໃຫ້ຄອບຄົວ. ເຂົາເຈົ້າໄດ້ສະແດງໃຫ້ຂ້ອຍໄດ້ຮູ້ວ່າເຂົາເຈົ້າກະກຽມອາຫານແນວໃດ ແລະ ມີຄວາມມັກໃນການຕ່ຳຫູກ ເຮັດໃຫ້ເຂົາເຈົ້າມີຄວາມພະລັງທີ່ຈະເຊື່ອໃນອະນາຄົດທີ່ດີກວ່າ.

ນອກນັ້ນ, ຊາວໜຸ່ມ ແລະ ແມ່ຍິງ ເດີນຕາມເສັ້ນທາງທີ່ມີຄວາມຮູ້ ເພື່ອສ້າງຈິດສຳນຶກໃນການປ້ອງກັນພະຍາດ, ການຖືພາທີ່ບໍ່ປາຖະໜາ, ເບິ່ງແຍງສຸຂະພາບ ແລະ ທັດສະນະຄະຕິໃໝ່ໃນການເຫັນເພດຊາຍ ແລະ ເພດຍິງມີສິດສະເໝີພາບ. ແນ່ນອນ, ຖ້າທຸກຄົນຮັບຮູ້ທ່າແຮງເຫຼົ່ານີ້, ບັນຫາຕ່າງໆ ຈະຫຼຸດລົງຢ່າງຫຼວງຫຼາຍ. ໂຄງການ ດີວີວີ ນີ້ໄດ້ສ້າງປະໂຫຍດຫຼາຍຢ່າງແກ່ຊີວິດຂອງຊາວບ້ານ ແລະ ຍັງຄົງສືບຕໍ່ສະໜັບສະໜູນໃຫ້ເຂົາເຈົ້າຮ່ວມກັນສ້າງໂຄງສ້າງຕົວຈິງດ້ວຍຕົນເອງ. ມັນສະແດງໃຫ້ເຫັນການປ່ຽນແປງອັນໃຫຍ່ຫຼວງ ແລະ ໃນທາງບວກໃນລະດັບຈຸນລະພາກໄປສູ່ລະດັບມະຫາພາກ. ດັ່ງນັ້ນ, ການດຳເນີນການທີ່ເປັນຮູບປະທຳຫຼາຍຂຶ້ນຈະເຮັດໃຫ້ຄວາມແຕກຕ່າງຢ່າງມີໄນຍະສຳຄັນ.

ນອກຈາກນີ້, ໃນຖານະທີ່ເປັນຜູ້ຊ່ຽວຊານດ້ານການຮຽນຮູ້ຕະຫຼອດຊີວິດ, ຂ້ອຍຮັບຮູ້ຄຸນຄ່າຂອງການເບິ່ງທວນຄືນໄປໃນອະດີດ, ສືບຕໍ່ຄົ້ນຫາອະນາຄົດ, ໂດຍການໃຊ້ຊີວິດ "ປະຈຸບັນ" ໃຫ້ເປັນຂອງຂວັນ. ສະນັ້ນ, ຂ້າພະເຈົ້າເຊື່ອໝັ້ນວ່າ ບັນດາເມືອງດັ່ງກ່າວມີຄວາມສາມາດທີ່ບົ່ມຊ້ອນ ອັນໃຫຍ່ຫຼວງທີ່ຈະບັນລຸໄດ້ໝາກຜົນທີ່ໜ້າເພິ່ງພໍໃຈ ຖ້າຫາກສືບຕໍ່ເຊື່ອມໂຍງເຂົ້າກັບທຸກລະດັບເສດຖະກິດ-ສັງຄົມ. ສະຫຼຸບແລ້ວ, ປະສົບການນີ້ໄດ້ສະແດງໃຫ້ເຫັນເຖິງໂອກາດ ອັນມີຄວາມໝາຍທີ່ຈະເປີດກວ້າງທັດສະນະຂອງຂ້ອຍກ່ຽວກັບວິທີເຮັດວຽກຂອງ ສຮຊ ໃນ ສປປ ລາວ, ເຫັນວ່າຄົນເຫຼົ່ານີ້ຮູ້ສຶກດີໃຈທີ່ຈະຮຽນຮູ້ຕະຫຼອດຊີວິດກັບຊຸມຊົນຂອງຕົນເອງ ແລະ ເພື່ອນບ້ານ. ໂດຍບໍ່ຕ້ອງສົງໃສ, ຂ້ອຍຈະຈົດຈຳປະສົບການນີ້ໄວ້ເປັນຢ່າງດີ.

# ຕອບແທນສັງຄົມ: ການຊ່ວຍເຫຼືອ, ການໃຫ້ ແລະ ອາສາສະໝັກ

*Ros Keng, ກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ, ກຳປູເຈຍ*

ການຊ່ວຍເຫຼືອ, ການໃຫ້ ແລະ ການເປັນອາສາສະໝັກແມ່ນການກະທຳທີ່ເຕີມເຕັມຄວາມໝາຍສູງສຸດຂອງຊີວິດ. ທັງສາມສິ່ງນີ້ຊ່ວຍເປັນແຮງໜູນໃຫ້ຄົນສ້າງຄວາມສາມັກຄີ ແລະ ມິດຕະພາບ, ພ້ອມທັງມີສະຕິຄວາມເປັນເຈົ້າການຮ່ວມກັນ. ທີ່ກ່າວມາຂ້າງເທິງນີ້ຍັງມີຜົນປະໂຫຍດຕໍ່ຄວາມເປັນຢູ່ທີ່ດີ ທັງທາງດ້ານຮ່າງກາຍ ແລະ ຈິດໃຈ ແລະ ມີສ່ວນໃຫ້ສັງຄົມປະກອບດ້ວຍຜົນກະທົບທີ່ເປັນປະໂຫຍດ, ທ່າແຮງ, ແລະ ຄວາມເຂັ້ມແຂງ.

ການຊ່ວຍເຫຼືອເຊິ່ງກັນ ແລະ ກັນແມ່ນເລື່ອງທີ່ງ່າຍດາຍ ແຕ່ມີປະໂຫຍດ. ການກະທຳທີ່ມີຄວາມເອື້ອອາທອນເຮັດໃຫ້ຄົນອື່ນຍອມຮັບ. ຍິ່ງໄປກວ່ານັ້ນ, ເມື່ອໄດ້ຊ່ວຍເຫຼືອຄົນອື່ນ, ເຂົາເຈົ້າສ່ວນຫຼາຍຈະຮູ້ສຶກດີກັບຕົວເອງ. ການທີ່ຮູ້ວ່າຍິ່ງເຮົາສະແດງຄວາມມີນໍ້າໃຈຫຼາຍເທົ່າໃດ, ກໍ່ຈະຮູ້ສຶກຂອບໃຈຫຼາຍຂຶ້ນ ແລະ ຈະໄດ້ຮັບແຮງບັນດານໃຈຫຼາຍຂຶ້ນ. ແທ້ຈິງແລ້ວ, ຊາວໜຸ່ມໄດ້ອຸທິດເວລາ ແລະ ຄວາມຮູ້ຂອງເຂົາເຈົ້າໃຫ້ກັບສູນການຮຽນຮູ້ຕະຫຼອດຊີວິດ ເພາະເຂົາເຈົ້າຮູ້ດີວ່າການຕອບແທນຊຸມຊົນນັ້ນ ເຮັດໃຫ້ສັງຄົມມີຄວາມເຂັ້ມແຂງ. ການໃຫ້ຄົນອື່ນສາມາດຫຼຸດຄວາມກົດດັນ, ຄວາມຮູ້ສຶກໂດດດ່ຽວ ແລະ ອາການຊຶມເສົ້າ. ການໃຫ້ສາມາດຊຸກຍູ້ໃຫ້ມີທັດສະນະໃນທາງບວກ ແລະ ຈິງໃຈຫຼາຍຂຶ້ນກ່ຽວກັບການຊ່ວຍເຫຼືອຄົນອື່ນໃນຊຸມຊົນ.

ໃນສະໄໝບູຮານຂອງກຳປູເຈຍ, ອາສາສະໝັກແມ່ນວັດທະນະທຳແຫ່ງການແບ່ງປັນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນມາແຕ່ດົນນານ. ກິດຈະກຳອາສາສະໝັກນີ້ ໄດ້ມີສ່ວນຊ່ວຍໃນການພັດທະນາສັງຄົມຢ່າງຫ້າວຫັນ, ໂດຍທີ່ປະຊາຊົນທຸກຊັ້ນຄົນໄດ້ຮັບການສົ່ງເສີມໃຫ້ມີສ່ວນຮ່ວມໃນການເຕີບໂຕຂອງຊຸມຊົນທ້ອງຖິ່ນ ແລະ ສັງຄົມ. ຊາວໜຸ່ມສາມາດຮຽນຮູ້, ເກັບກ່ຽວປະສົບການ ແລະ ປັບປຸງໂດຍຜ່ານການເປັນອາສາສະໝັກໃນຫຼາຍໆ ດ້ານ, ລວມທັງການຄິດວິເຄາະ, ຄວາມຮູ້ກ່ຽວກັບບັນຫາທາງສັງຄົມ, ການພັດທະນາທັກສະທາງກາຍະພາບ ແລະ ທາງອາລົມ, ການເຮັດວຽກເປັນທີມ, ແລະ ການສ້າງຄວາມຮູ້ສຶກຮັກຊາດ.



ອາສາສະໝັກ ຊາວໜຸ່ມ ສອນຢູ່ໃນ ຫ້ອງຮຽນຂັ້ນປະຖົມ

ການເປັນອາສາສະໝັກໄດ້ຂະຫຍາຍໝາກຜົນຂອງການຊ່ວຍເຫຼືອຜູ້ອື່ນ ເຊັ່ນດຽວກັນກັບການຕອບແທນຊຸມຊົນໂດຍການໃຫ້ໂອກາດໃນຫຼາຍດ້ານເພື່ອສ້າງຄວາມແຕກຕ່າງທີ່ດີ. ຕົວຢ່າງຂອງການເປັນອາສາສະໝັກ ນັບຕັ້ງແຕ່ທຳຄວາມສະອາດເດີ່ນໂຮງຮຽນ, ການຫົດນໍ້າຕົ້ນໄມ້, ການປູກພືດຜົນ ແລະ ການອຸທິດຕົນເພື່ອອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລທີ່ສະໜັບສະໜູນການພັດທະນາຊຸມຊົນ. ທັງອາສາສະໝັກ ແລະ ຜູ້ຮັບ ໄດ້ຮັບຄວາມຮູ້ສຶກສົດຊື່ນຈາກການເປັນອາສາສະໝັກ. ພາລະກິດຂອງການບັນລຸເປົ້າໝາຍທົ່ວໄປແມ່ນເພື່ອສົ່ງເສີມການເຮັດວຽກເປັນທີເລັດເຊັ່ນດຽວກັນກັບການສະໜັບສະໜູນເຊິ່ງກັນ ແລະ ກັນ ແລະ ມິດຕະພາບ.

ການເປັນອາສາສະໝັກອາດຈະເພີ່ມໂອກາດໃນການຮຽນຮູ້ ແລະ ພັດທະນາທັກສະໃໝ່. ແທ້ຈິງແລ້ວ, ທຸກຄົນສາມາດເປັນອາສາສະໝັກຢູ່ໃນສູນການຮຽນຮູ້ຕະຫຼອດຊີວິດ ແລະ ໄດ້ຮັບຄວາມຮູ້ເພີ່ມເຕີມຂອງຂັ້ນຕອນການບໍລິຫານ ແລະ ຢູ່ໃນຂະບວນການວາງແຜນພັດທະນາ. ເຂົາເຈົ້າຈະໄດ້ສ້າງພື້ນຖານຄວາມຮູ້ຂອງຕົນເອງ. ເມື່ອພິຈາລະນາຈາກປະສົບການ ນາຍຈ້າງຈະເຫັນຄຸນຄ່າຂອງຜູ້ສະໝັກທີ່ໄດ້ຜ່ານການເປັນອາສາສະໝັກ, ອາສາສະໝັກຍັງສາມາດເສີມຂະຫຍາຍຄວາມສາມາດຂອງບຸກຄົນໃນການເຮັດວຽກ.

ລັດຖະບານກຳປູເຈຍໄດ້ໃຫ້ຄວາມສຳຄັນຂອງການສຶກສາ, ຝຶກອົບຮົມ ແລະ ພັດທະນາຄວາມອາດສາມາດຂອງຊາວໜຸ່ມທັງຢູ່ໃນ ແລະ ນອກໂຮງຮຽນ, ໂດຍມີຈຸດປະສົງເພື່ອໃຫ້ຊາວໜຸ່ມຄົນໜຶ່ງຄວນມີທັກສະຊີວິດຢ່າງນ້ອຍໜຶ່ງທັກສະ" ຕະຫຼອດເຖິງຍຸດທະສາດແຫ່ງຊາດກ່ຽວກັບການພັດທະນາຊາວໜຸ່ມກຳປູເຈຍ. ໃນແຜນຍຸດທະສາດຂອງນະໂຍບາຍ ສະບັບທີ 10 ໄດ້ເວົ້າເຖິງບັນຫາການເປັນອາສາສະໝັກໃນກຳປູເຈຍທີ່ກ່ຽວຂ້ອງກັບການເຊື່ອມໂຍງ SDGs 2016-2030. ນະໂຍບາຍແຫ່ງຊາດກ່ຽວກັບການຮຽນຮູ້ຕະຫຼອດຊີວິດ ທີ່ໄດ້ລະບຸໄວ້ໃນຍຸດທະສາດທີ 8: ການສົ່ງເສີມວັດທະນະທຳດຳລົງຊີວິດສຳລັບພົນລະເມືອງທົ່ວໂລກ: "ການເຄື່ອນໄຫວຂອງພົນລະເມືອງທຸກຄົນ, ໂດຍສະເພາະແມ່ນຊາວໜຸ່ມ, ເຂົ້າຮ່ວມວຽກງານດ້ວຍຄວາມສະໝັກໃຈໃນທຸກຮູບການ ແລະ ຂອບນະໂຍບາຍເສດຖະກິດ-ສັງຄົມ ດີຈີຕອນຂອງກຳປູເຈຍ 2021-2035". ບົນພື້ນຖານນີ້, ກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ ໄດ້ຜະລິດປຶ້ມຄູ່ມືການຈັດຕັ້ງປະຕິບັດວຽກງານອາສາສະໝັກຢູ່ສູນການຮຽນຮູ້ຊຸມຊົນ ແລະ ສູນຊາວໜຸ່ມເພື່ອຊ່ວຍເຫຼືອໜ່ວຍງານທີ່ຄຸ້ມຄອງຊາວໜຸ່ມ ແລະ ອາສາສະໝັກຊາວໜຸ່ມໃນນະຄອນຫຼວງ ແລະ ບັນດາແຂວງທີ່ຮັບຜິດຊອບໃນການປະສານງານ ແລະ ຊ່ວຍເຫຼືອໃນການຈັດຕັ້ງປະຕິບັດຂໍ້ລິເລີ່ມທີ່ພວມດຳເນີນຢູ່.

ຂ້າພະເຈົ້າເອງ ໃນນາມສ່ວນຕົວກໍຄືການນຳຂອງກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ ຂໍສະແດງຄວາມຂອບໃຈຢ່າງຈິງໃຈມາຍັງຫ້ອງການ ດີວີວີ ອິນເຕີເນເຊິນແນວ ທີ່ໄດ້

ຮ່ວມມືກັບ ກົມສູນກາງຊາວໜຸ່ມ ໃນການຮັບສະໝັກອາສາສະໝັກຊາວໜຸ່ມ ຈຳນວນ 220 ຄົນ ໄປເຮັດວຽກເປັນອາສາສະໝັກ ແລະ ຝຶກງານ ຢູ່ພະແນກສຶກສາທິການ ຊາວໜຸ່ມ ແລະ ກິລາແຂວງ. ແລະ ບາງສູນການຮຽນຮູ້ຊຸມຊົນຕັ້ງແຕ່ປີ 2020 ຈົນເຖິງປັດຈຸບັນ. ບັນດາກຸ່ມອາສາສະໝັກຊາວໜຸ່ມທີ່ໄດ້ຈັດຕັ້ງປະຕິບັດໂຄງການໃນຊຸມຊົນສາມາດວາງແຜນ, ລະດົມທຶນ, ຈັດຕັ້ງປະຕິບັດໂຄງການ ແລະ ນຳພາໂຄງການໃຫ້ປະສົບຜົນສຳເລັດ ເຊິ່ງໄດ້ຮັບການສະໜັບສະໜູນຢ່າງດີຈາກທຸກສາຂາອາຊີບໃນທົ່ວປະເທດ.

ສະຫຼຸບແລ້ວ, ອາສາສະໝັກແມ່ນກຳລັງຂັບເຄື່ອນທີ່ສຳຄັນໃນການບັນລຸເປົ້າໝາຍ SDGs ທັງໝົດ, ເຊິ່ງເປັນວິໄສທັດຂອງສະຫະປະຊາຊາດ 2030. ການຊ່ວຍເຫຼືອ, ການໃຫ້, ແລະ ອາສາສະໝັກລ້ວນແຕ່ແມ່ນວິທີການອັນຍິ່ງໃຫຍ່ເພື່ອເຮັດໃຫ້ໂລກເປັນບ່ອນທີ່ດີກວ່າ. ອີງຕາມບຸກຄົນ, ກິດຈະກຳເຫຼົ່ານີ້ອາດຈະກິ່ງໄປກິ່ງມາ ຫຼື ສັບສົນ, ແຕ່ກິດຈະກຳເຫຼົ່ານີ້ລ້ວນແຕ່ສິ່ງຜົນກະທົບຢ່າງມີໄນຍະສຳຄັນ ຕໍ່ປະຊາຊົນແລະສັງຄົມໂດຍທົ່ວໄປ. ທ້າຍທີ່ສຸດແລ້ວ, ການກະທຳແຫ່ງຄວາມເອື້ອເຟື້ອເພື່ອແຜ່ ແລະ ຄວາມເມດຕາເຫຼົ່ານີ້ຈະເຊີດຊູຈິດວິນຍານຂອງເຮົາ ແລະ ເສີມສ້າງຄວາມຜູກພັນຂອງເຮົາກັບຄົນທີ່ຢູ່ອ້ອມຮອບເຮົາ. ດັ່ງນັ້ນ, ມັນເປັນສິ່ງສຳຄັນທີ່ພວກເຮົາຕ້ອງໃຫ້ກຽດ ແລະ ຕົບມືໃຫ້ຜູ້ທີ່ລົງທຶນທັງຊັບພະຍາກອນ ແລະ ເວລາຂອງພວກເຂົາໃນການພັດທະນາຊຸມຊົນ ແລະ ຊີວິດຂອງຄົນອື່ນ.

# ການພັດທະນາສູນການຮຽນຮູ້ຊຸມຊົນຂອງພວກເຮົາ

*Prak Toeun,* AngChum Primary School and the Sre Knong Community learning Center, Kampot Province, Cambodia

ໃນປີ 2013, ສູນການຮຽນຮູ້ຊຸມຊົນ (ສຮຊ) ຂອງພວກເຮົາໄດ້ຮັບການສ້າງຕັ້ງຂຶ້ນໂດຍກົມການສຶກສາ ແລະ ປະສານງານ, ກະຊວງສຶກສາທິການ. ໂດຍການສະໜັບສະໜູນຂອງກະຊວງ, ພວກເຮົາສາມາດວ່າຈ້າງຄູວິຊາຊີບ 2 ທ່ານຈາກຊຸມຊົນ. ດ້ວຍງົບປະມານພຽງເລັກນ້ອຍຈາກກະຊວງ, ພວກເຮົາໄດ້ຊື້ອຸປະກອນ ທີ່ຊ່ວຍໃຫ້ພວກເຮົາເລີ່ມຕົ້ນການພັດທະນາ ສຮຊ ໄດ້.

ແຕ່ໜ້າເສຍດາຍ, ເນື່ອງຈາກການຂາດການປະຊາສຳພັນ, ສຮຊ ຈຶ່ງບໍ່ເປັນທີ່ຮູ້ຈັກຫຼາຍໃນເວລານັ້ນ ແລະ ພວກເຮົາບໍ່ມີໂຄງສ້າງພື້ນຖານ ເພື່ອປັບປຸງຄວາມກ້າວໜ້າໃນການເຮັດວຽກຂອງພວກເຮົາ. ຍ້ອນວ່າມີພຽງຄອມພິວເຕີເກົ່າຈຳນວນໜຶ່ງ ແລະ ບໍ່ມີພື້ນທີ່ເກັບມ້ຽນເອກະສານ, ພວກເຮົາຈຶ່ງບໍ່ສາມາດເຮັດວຽກງານຄຸ້ມຄອງທີ່ສຳຄັນໄດ້. ນອກຈາກນີ້, ພວກເຮົາຍັງບໍ່ໄດ້ມີການສ້າງລະບົບການຄຸ້ມຄອງຂຶ້ນເທື່ອ. ການແຈກຢາຍ ແລະ ວາງແຜນໜ້າວຽກຂອງ ສຮຊ ແມ່ນຍັງບໍ່ໄດ້ກຳນົດ, ເຊິ່ງເຮັດໃຫ້ວຽກງານສ່ວນຫຼາຍໄປສຸມຢູ່ນຳຜູ້ອຳນວຍການຂອງສູນ.

ຄວາມທ້າທາຍທີ່ໃຫຍ່ທີ່ສຸດກ່ອນທີ່ຈະຮ່ວມມືກັບ ດີວີວີ ອິນເຕີເນເຊິນແນວ ແມ່ນການປະກົດຕົວຂອງ ສຮຊ. ສຮຊ ຂອງພວກເຮົາແມ່ນສູນການຮຽນຮູ້ຊຸມຊົນ ລະດັບຊາດແຫ່ງທຳອິດໃນເຂດດັ່ງກ່າວ, ເຮັດໃຫ້ມັນເປັນແນວຄວາມຄິດໃຫມ່ສຳລັບຊຸມຊົນ. ທັກສະການຈັດການບໍລິຫານຂອງທີມງານແມ່ນມີຄວາມຈຳກັດຫຼາຍ, ເຊິ່ງເປັນສາເຫດເຮັດໃຫ້ວຽກງານເຊັ່ນ: ການນຳພາ, ການຈັດຕັ້ງປະຕິບັດ, ງົບປະມານ, ແລະ ເຄືອຂ່າຍບໍ່ສາມາດຖືກນຳໃຊ້. ຖ້າບໍ່ມີອີງການຈັດຕັ້ງຄູ່ຮ່ວມພັດທະນາ ແລະ ການມີສ່ວນຮ່ວມຂອງພະສົງໃນທ້ອງຖິ່ນ ລວມທັງອຳນາດການປົກຄອງທ້ອງຖິ່ນ, ສຮຊ ກໍ່ບໍ່ສາມາດພັດທະນາໄປເປັນພື້ນທີ່ສຳລັບການຮຽນຮູ້ທີ່ດີກວ່າ.



ນອກຈາກນັ້ນ, ສະພາບແວດລ້ອມຂອງສູນຍັງບໍ່ສ້າງແຮງບັນດານໃຈໃນການຮຽນຮູ້. ຖ້າບໍ່ມີສວນ, ພື້ນທີ່ນີ້ແມ່ນຮົກ ແລະເປິເປື້ອນ. ບົດຮຽນການສອນບໍ່ໄດ້ຖືກປັບໃຫ້ເຂົ້າກັບຕາຕະລາງ ແລະ ຄວາມຕ້ອງການຂອງນັກຮຽນ, ເຊິ່ງເປັນສາເຫດທີ່ນັກຮຽນຫຼາຍຄົນບໍ່ໄດ້ເຂົ້າຫ້ອງຮຽນຂອງເຂົາເຈົ້າ. ເຫັນໄດ້ຊັດເຈນວ່າການສຶກສານອກໂຮງຮຽນຕ້ອງໄດ້ຮັບການຈັດຕັ້ງເປັນແນວຄວາມຄິດໃໝ່ໃນຊຸມຊົນເພື່ອສະໜອງການຮຽນຮູ້ຕະຫຼອດຊີວິດໃຫ້ແກ່ປະຊາຊົນຫຼາຍຂຶ້ນ.

## ການຮ່ວມມືກັບ ດີວີວີ ໃນປີ 2020-2023

ຢ່າງໃດກໍ່ຕາມ, ມີການປ່ຽນແປງຫຼາຍຢ່າງນັບຕັ້ງແຕ່ການຮ່ວມມືກັບ ດີວີວີ ອິນເຕີເນເຊິນແນວ. ໂດຍສະເພາະໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19, ເມື່ອໂຮງຮຽນທັງໝົດຖືກປິດ, ພວກເຮົາໂຊກດີຫຼາຍທີ່ໄດ້ມີ DVV International ເປັນຄູ່ຮ່ວມພັດທະນາຂອງພວກເຮົາ. ໂດຍການຕິດຕັ້ງຫ້ອງຮຽນຄອມພິວເຕີ, ການສ້າງສວນຄົວ, ການສ້າງຂີດຄວາມອາດສາມາດໃຫ້ແກ່ຄະນະບໍລິຫານ ແລະ ການສະຫນອງງົບປະມານ, ສຮຊ ຂອງພວກເຮົາສາມາດພັດທະນາຢ່າງຫຼວງຫຼາຍ. ດີວີວີ ໄດ້ປ່ຽນຫ້ອງທຳມະດາໃຫ້ເປັນຫ້ອງທົດລອງ ທີ່ມີຄອມພິວເຕີ, ກ້ອງຖ່າຍຮູບຂະໜາດໃຫຍ່ ແລະ ອິນເຕີເນັດ. ຫ້ອງນີ້ຊ່ວຍໃຫ້ພວກເຮົາສາມາດຈັດກອງປະຊຸມໃນ Zoom ຫຼື Google Meet ແລະ ຜະລິດວິດີໂອການຮຽນຮູ້ໃນຫົວຂໍ້ຕ່າງໆ.

ໃນລະຫວ່າງ ໂຄວິດ, ພວກເຮົາໄດ້ສ້າງວິດີໂອຫຼາຍຮ້ອຍລາຍການ, ຈາກນັ້ນພວກເຮົາກໍໄດ້ເຜີຍແຜ່ໃນກຸ່ມສົນທະນາຕ່າງໆ ໃຫ້ນັກຮຽນເບິ່ງ. ນີ້ບໍ່ພຽງແຕ່ຊ່ວຍໃຫ້ໂຮງຮຽນສອນຄະນິດສາດ ແລະ ພາສາຂະເໝນເທົ່ານັ້ນ, ແຕ່ຍັງຊ່ວຍໃຫ້ນັກຮຽນໄດ້ຮັບໃບປະກາດຈົບຊັ້ນສູງໃນໂຮງຮຽນ ຫຼື ວິທະຍາໄລ. ຢູ່

ບ່ອນນີ້ເຂົາເຈົ້າຮຽນຮູ້ການເຮັດວຽກ ແລະ ຮຽນຄອມພິວເຕີ, ກະກຽມເອກະສານ, ສ້າງຊີວະປະຫວັດ ແລະ ສະໝັກວຽກ. ຄວາມສາມາດໃນການສະໝັກເຮັດວຽກຕ່າງໆ ໄດ້ຊ່ວຍໃຫ້ຖືກບັນຈຸເຂົ້າເປັນຄູສອນເອກະຊົນ, ເຂົ້າຮຽນຕໍ່ຢູ່ໃນໂຮງຮຽນນາໆຊາດ ແລະ ສະໝັກເຂົ້າມະຫາວິທະຍາໄລ.

ນອກຈາກນັ້ນ, ການຜະລິດວິດີໂອກ່ຽວກັບກະສິກຳເຊັ່ນ: ການຜະລິດຝຸ່ນບົ່ມ, ການປູກ, ການກ້າເບ້ຍທຸກປະເພດ, ການຜະລິດຖ່ານ ແລະ ການປະສົມຝຸ່ນ ລວມທັງການຜະລິດປື້ມກ່ຽວກັບທຸລະກິດກະສິກຳໄດ້ຊ່ວຍໃຫ້ຊຸມຊົນຂອງພວກເຮົາພັດທະນາສວນກະສິກຳ ແລະ ສວນຂອງເຂົາເຈົ້າ. ໂດຍການລະດົມທຶນຈາກມະຫາວິທະຍາໄລແຫ່ງຊາດກຳປູເຈຍ ແລະ ການສະໜັບສະໜູນ



ການຝຶກອົບຮົມ ICT ໃນ ສຮຊ

ຈາກ ດີວີວີ ອິນເຕີເນເຊິນແນວ, ພວກເຮົາໄດ້ມີໂອກາດເຮັດສວນຜັກ 60 ໝານ ແລະ ເຮັດອາຫານສຳລັບລ້ຽງໄກ່.

ຫ້ອງຄອມພິວເຕີຍັງຊ່ວຍໃຫ້ທີມງານຄຸ້ມຄອງ ແລະ ຄະນະກຳມະການຂອງພວກເຮົາອອກແບບແຜນງົບປະມານ ແລະ ຊ່ວຍເຫຼືອຊຸມຊົນໃນຫົວຂໍ້ທີ່ແຕກຕ່າງກັນ. ຕົວຢ່າງ, ຕອນນີ້ພວກເຮົາສາມາດໃຫ້ບໍລິການອັດເອກະສານໄດ້. ໂດຍຜ່ານການບໍລິການຂອງພວກເຮົາ, ຊຸມຊົນບໍ່ຈຳເປັນຕ້ອງເດີນທາງໄກ ເຊິ່ງຈະຊ່ວຍປະຫຍັດເວລາ ແລະ ເງິນ. 50% ຂອງລາຍຮັບທີ່ສ້າງຂຶ້ນແມ່ນບໍລິຈາກໃຫ້ຊຸມຊົນ ແລະ 50% ແມ່ນໃຊ້ສຳລັບການປັບປຸງ ສຮຊ.

ໃນການຮ່ວມມືກັບ ດີວີວີ, ຄະນະກຳມະໄດ້ຮັບການເສີມສ້າງຂີດຄວາມສາມາດ ແລະ ການຝຶກອົບຮົມ. ເຊິ່ງໄດ້ຊ່ວຍສູນໃນການດຳເນີນກິດຈະກຳຕາມຫຼັກສູດ. ດຽວນີ້ພວກເຮົາເປີດສອນວິຊາຫັດຖະກຳໂລຫະ, ການລ້ຽງປາ ແລະ ການປຸງແຕ່ງຜະລິດຕະພັນເຊັ່ນ: ການແປຮູບຈາກຫົວພືດເປັນແປ້ງ. ຊຸມຊົນໄດ້ຮຽນຮູ້ວິທີການສ້າງລາຍຮັບຜ່ານຫ້ອງຄອມພິວເຕີ ແລະ ວິທີການຕັ້ງຮ້ານຂາຍເຄື່ອງທີ່ປອດໄພເພື່ອມີລາຍຮັບປະຈຳວັນ. ຜ່ານການສະເຫຼີມສະຫຼອງກິດຈະກຳທີ່ແຕກຕ່າງກັນ ເຊັ່ນ ງານບຸນດອກໄມ້ສາມັກຄີ ສຮຊ ໄດ້ດຶງດູດປະຊາຊົນຈາກທ້ອງຖິ່ນນັບມື້ນັບຫຼາຍຂຶ້ນ ເຊິ່ງເປັນວິທີທີ່ດີໃນການສົ່ງເສີມ ສຮຊ ໃຫ້ໄດ້ຮັບຜົນດີ. ດັ່ງນັ້ນ, ຄວາມຕ້ອງການນຳໃຊ້ ສຮຊ ແມ່ນສູງ ແລະໃນປັດຈຸບັນພວກເຮົາສາມາດເປີດຫ້ອງຮຽນພາສາອັງກິດ ແລະ ຄອມພິວເຕີໃນຕອນເຊົ້າ ແລະ ຕອນແລງ.

ຜົນສຳເລັດອັນໃຫຍ່ຫຼວງຂອງພວກເຮົາໃນ ສຮຊ ຕັ້ງແຕ່ມີການຍົກລະດັບພື້ນຖານໂຄງລ່າງໄປສູ່ການປັບປຸງໂອກາດທາງການສຶກສາສຳລັບຊຸມຊົນ. ກ່ອນອື່ນໝົດ, ພວກຮົາໄດ້ກໍ່ສ້າງອາຄານ 2 ຫຼັງ, ລວມມີໂຮງງານ, ຫ້ອງຂໍ້ມູນຂ່າວສານ ແລະ ຫ້ອງແປຮູບຜະລິດຕະພັນກະສິກຳ. ພວກເຮົາຍັງໄດ້ຕິດຕັ້ງໂຄມໄຟແຮງສູງ 32 ດອກ, ເຊິ່ງຊ່ວຍໃຫ້ພວກເຮົາສາມາດຮຽນໄດ້ໃນຕອນແລງ. ປະການທີສອງ, ສຮຊ ໄດ້ກາຍເປັນສະຖານທີ່ບ່ອນທີ່ຄົນມັກພັກເຊົາ ແລະ ແລກປ່ຽນປະສົບການ. ປະການທີສາມ, ພວກເຮົາໄດ້ປັບປຸງພື້ນທີ່ເພື່ອປູກພືດ, ລ້ຽງໄກ່ ແລະ ຂະຫຍາຍພັນລ້ຽງປາ. ປະການທີສີ່, ພວກເຮົາໄດ້ໃຫ້ຄວາມຮູ້ແກ່ກຸ່ມເປົ້າໝາຍໃນຫົວຂໍ້ທີ່ແຕກຕ່າງກັນ, ເຊັ່ນ: ພະສົງ, ສະພາປະຊາຊົນ, ຜູ້ທີ່ເປັນຫົວໜ້າ, ນັກຮຽນຈາກລະດັບຕ່າງໆ ເຊັ່ນດຽວກັນກັບຊາວໜຸ່ມທີ່ອອກໂຮງຮຽນ. ພວກເຮົາຍັງໃຫ້ໂອກາດແກ່ນັກຮຽນທີ່ຈົບການສຶກສາໄດ້ເປັນວິຊາຊີບຄູສອນ, ອາສາສະໝັກ, ຫຼື ສະພາຊຸມຊົນ.

ສະຫຼຸບແລ້ວ, ກ່ອນທີ່ຈະຮ່ວມມືກັບ ດີວີວີ, ສຮຊ ບ້ານສະແຮງ ຄະນົງ ແມ່ນດຳເນີນການໄປຕາມປົກກະຕິຄືກັບສູນອື່ນໆ ໃນທົ່ວປະເທດ. ແຕ່ພາຍຫຼັງໄດ້ຮັບການສະໜັບສະໜູນຂອງ ດີວີວີ, ສູນໄດ້ມີການປ່ຽນແປງ ທັງທາງດ້ານຄວາມສາມາດໃນການຄຸ້ມຄອງ ແລະ ໂອກາດ. ປະຈຸບັນ, ຊຸມຊົນໄດ້ມີສ່ວນຮ່ວມຢ່າງຫ້າວຫັນໃນຫຼາຍກິດຈະກຳດ້ານວິຊາຊີບ ແລະ ໃນການພັດທະນາແນວຄວາມຄິດສ້າງສັນ, ທັນ ສຮຊ ເປັນສູນການຮຽນຮູ້ຕະຫຼອດຊີວິດ.



ອ້ອມຮອບບໍລິເວນ ສຮຊ ທີ່ເຕັມໄປດ້ວຍ ສວນຜັກ ຄອກໄກ່ ແລະ ສະລ້ຽງປາ




# ການຮຽນການສອນການ ສຶກສານອກໂຮງຮຽນໃນຮູບແບບໃໝ່

*ສຸກັນຍາ ມະນີວັນ, ສູນພັດທະນາການສຶກສານອກໂຮງຮຽນ*

ການຈັດການຮຽນການສອນບຳລຸງຍົກລະດັບການສຶກສາ ແມ່ນໄດ້ເລີ່ມປະຕິບັດແຕ່ປີ 2009 ເປັນຕົ້ນມາ ເຊິ່ງມີນັກຮຽນບຳລຸງທັງໝົດ 555 ຄົນ, ຍິງ 178 ຄົນ. ມາຮອດປີ 2019 ເກີດມີການແຜ່ລະບາດຂອງພະຍາດຈຸລະໂລກສາຍພັນໃໝ່ໂຄວິດ 19 ເຊິ່ງເຮັດໃຫ້ການຈັດການຮຽນ ການສອນການສຶກສານອກໂຮງຮຽນ ຖືກຢຸດສະຫງັດ, ຜູ້ຮຽນບໍ່ສາມາດຮຽນໄດ້. ສະນັ້ນ, ກະຊວງສຶກສາທິການ ແລະ ກິລາ ກໍ່ຄືກົມການສຶກສານອກໂຮງຮຽນ ເວົ້າລວມ, ເວົ້າສະເພາະແມ່ນສູນພັດທະນາການສຶກສານອກໂຮງຮຽນ ຕ້ອງໄດ້ພັດທະນາຮູບແບບ ແລະ ວິທີການຮຽນການສອນແບບໃໝ່ໃຫ້ຕອບສະໜອງກັບສະພາບການໃນແຕ່ລະໄລຍະ.

ຈາກບັນຫາ ແລະ ສິ່ງທ້າທາຍດັ່ງກ່າວສູນ ກໍ່ໄດ້ພົວພັນປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະ ແມ່ນອົງການການສຶກສາຜູ້ໃຫຍ່ເຢຍລະມັນ (DVV International) ໃນການຕອບສະໜອງດ້ານງົບປະມານໃນການຄົ້ນຄວ້າວິໄຈຫາສາເຫດ, ບັນຫາ ແລະ ຄວາມຕ້ອງການຂອງກຸ່ມເປົ້າໝາຍ ເພື່ອໃຫ້ສອດຄ່ອງກັບສະພາບທ້ອງຖິ່ນ ແລະ ສະພາບການປ່ຽນແປງໃນໄລຍະໃໝ່. ປີ 2020-2023 ສູນຮ່ວມກັບ ຫ້ອງການ ດີວີວີ ອິນເຕີນາເຊິນແນວໂດຍໄດ້ຮັບການອະນຸມັດຈາກກົມການສຶກສານອກໂຮງຮຽນໃຫ້ເຮັດການວິໄຈກ່ຽວກັບວຽກງານການສຶກສານອກໂຮງຮຽນໃນ 3 ຫົວຂໍ້ຄື: "ຄວາມເປັນໄປໄດ້ໃນການຈັດຕັ້ງການຮຽນການສອນອອນໄລການສຶກສານອກໂຮງຮຽນ ໃນ ສປປ ລາວ" ປີ 2021 "ຄວາມເປັນໄປໄດ້ຂອງເຄື່ອງມືການຈັດການຮຽນ ການສອນອອນໄລສຳລັບການສຶກສານອກໂຮງຮຽນໃນ ສປປ ລາວ" ປີ 2022 "ສຶກສາແຮງຈູງໃຈ ແລະ ຄວາມຕ້ອງການຂອງກຸ່ມເປົ້າໝາຍໃນການເຂົ້າມາຮຽນໃນການສຶກສານອກໂຮງຮຽນ" ປີ 2023 ຈາກຜົນການວິໄຈສະແດງໃຫ້ເຫັນວ່າການສຶກສານອກໂຮງຮຽນສາມາດຈັດການຮຽນການສອນແບບອອນໄລໄດ້ໂດຍການພັດທະນາເຄື່ອງມື, ຮູບແບບ, ວິທີການຕ່າງໆ ຄຽງຄູ່ກັບການເສີມສ້າງຂີດຄວາມສາມາດຂອງພະນັກງານຄູສອນໃນຂັ້ນຕ່າງໆ.

ຈາກຜົນການຄົ້ນຄວ້າວິໄຈດັ່ງກ່າວສະແດງໃຫ້ເຫັນວ່າການສຶກສານອກໂຮງຮຽນມີຄວາມຕ້ອງການໃນການນຳໃຊ້ເຄື່ອງມືການຈັດການຮຽນການສອນອອນໄລ ເພື່ອຕອບສະໜອງກັບກຸ່ມເປົ້າໝາຍ ແລະ ຕອບສະໜອງກັບການປ່ຽນແປງແຕ່ລະໄລຍະ. ຈາກເຫດຜົນດັ່ງກ່າວ ສູນພັດທະນາການສຶກສານອກໂຮງຮຽນຈຶ່ງເຫັນໄດ້ເຖິງຄວາມສຳຄັນ ແລະ ໄດ້ຮ່ວມມືກັບຫ້ອງການ ດີວີວີ ອິນເຕີນາເຊິນແນວ ໃນການຊອກຫາຄວາມເປັນໄປໄດ້ຂອງເຄື່ອງມືທີ່ເໝາະສົມກັບກັບການຈັດການຮຽນການສອນການສຶກສານອກໂຮງຮຽນ ໂດຍສະເພາະໃນເຂດພູມມີພາກທີ່ມີຄວາມພ້ອມ. ອີດີແອັບ (ED App) ແມ່ນໜຶ່ງຂອງເຄື່ອງມືທີ່ຜູ້ວິໄຈໄດ້ນຳສະເໜີພິຈະລານາ ພັດທະນາເພື່ອນຳໄປໃຊ້ເຂົ້າໃນການຈັດການຮຽນການສອນ ກສນ. ດັ່ງນັ້ນ, ED App ຈຶ່ງໄດ້ພັດທະນາຂຶ້ນໃນທ້າຍປີ 2022, ໃນກອງປະຊຸມຝຶກອົບຮົມໄອຊີທີຂອງຜູ້ບໍລິຫານ ແລະ ວິຊາການການສຶກສານອກໂຮງຮຽນ ທີ່ ສພນ. ຄັ້ງທີ 2 ໄດ້ທົດລອງນຳໃຊ້ໃນເດືອນກຸມພາ 2023 ກັບຜູ້ຮຽນຊັ້ນມັດທະຍົມສຶກສາປີທີ 7 ລະບົບບຳລຸງ ທີ່ ສພນ. ຜ່ານການທົດລອງການນຳໃຊ້ສາມາດສະຫຼຸບໄດ້ນີ້:

ດ້ານດີ:

- ເປັນວິທີການອັນໃໝ່ສຳລັບຂະບວນການຈັດການຮຽນການສອນ
- ມີຄວາມມ່ວນຊື່ນ ແລະ ບໍ່ໜ້າເບື່ອ
- ໄດ້ຮຽນຮູ້ວິທີການອັນໃໝ່
- ສາມາດຮຽນໄດ້ຕະຫຼອດເວລາ
- ມີຄວາມຈຳເປັນໃນໄລຍະປັດຈຸບັນ ແລະ ອະນາຄົດ.

EdApp on mobile mode

ດ້ານປັບປຸງ:

- ຕ້ອງເພີ່ມວິດີໂອທີ່ກ່ຽວຂ້ອງກັບບົດຮຽນໃຫ້ຫຼາຍຂຶ້ນ
- ຄວນເພີ່ມກິດຈະກຳການຮຽນການສອນເປັນຕົ້ນແມ່ນ: ເກມ, ຄຳຖາມ-ຄຳຕອບ, ການໃຫ້ຄະແນນ ແລະ ອື່ນໆ
- ເພີ່ມຄຳອະທິບາຍໃນບັນດາສູດ, ບົດແກ້, ກຳນົດຄະແນນແຕ່ລະຂໍ້.

ເມື່ອສູນໄດ້ຮັບຄຳເຫັນດັ່ງກ່າວແລ້ວກໍ່ໄດ້ປຶກສາຫາລື ແລະ ປັບປຸງດ້ານເນື້ອໃນ, ແລະ ວິທີການຕ່າງໆຈົນເຮັດໃຫ້ສຳເລັດຕາມລະດັບຄາດໝາຍດັ່ງນີ້: ທັງໝົດມີ 10 ວິຊາຮຽນທີ່ຖືກພັດທະນາຂຶ້ນໃນແອັບຄື:

- ພາສາລາວມີ 15 ບົດ
- ຄະນິດສາດມີ 28 ບົດ
- ປະຫວັດສາດມີ 19 ບົດ
- ຟີຊິກສາດ 26 ບົດ
- ຊີວະສາດ 21 ບົດ
- ວັນນະຄະດີມີ 13 ບົດ
- ສຶກສາພົນລະເມືອງມີ 10 ບົດ
- ພູມສາດມີ 19 ບົດ
- ເຄມີສາດມີ 25 ບົດ
- ພາສາອັງກິດ 12 ບົດ

ເມື່ອເອດີແອັບ (Ed App) ໄດ້ຮັບການພັດທະນາຂຶ້ນສົມບູນຂັ້ນພື້ນຖານ ສູນພັດທະນາການສຶກສານອກໂຮງຮຽນ ໂດຍໄດ້ຮັບການສະໜັບສະໜູນດ້ານງົບປະມານຈາກອົງການດີວີວີ ອິນເຕີນາເຊິນແນວ ໄດ້ຈັດກອງປະຊຸມກວດຜ່ານ, ປັບປຸງຂຶ້ນໃນຄັ້ງວັນທີ 17-21 ກໍລະກົດ 2023 ທີ່ ສພນ ເຊິ່ງມີຜູ້ເຂົ້າຮ່ວມຈາກສູນພັດທະນາການສຶກສານອກໂຮງຮຽນ, ກົມການສຶກສານອກໂຮງຮຽນ, ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ. ຜ່ານການນຳສະເໜີກວດຜ່ານເນື້ອໃນແຕ່ລະວິຊາ, ແຕ່ລະບົດສາມາດສະຫຼຸບໄດ້ດັ່ງນີ້:

- ແອັບດັ່ງກ່າວມີຄວາມສຳຄັນຫຼາຍສຳລັບການຈັດການສຶກສານອກໂຮງຮຽນໃນບັນດາແຂວງທີ່ມີຄວາມພ້ອມເພາະວ່າແອັບນີ້ໃຊ້ສະດວກສະບາຍ
- ງ່າຍໃນການຕິດຕາມ, ໃຫ້ຄະແນນ, ແລະ ປະເມີນຜົນການຮຽນການສອນ
- ຜູ້ຮຽນສາມາດຮຽນດ້ວຍຕົນເອງໄດ້ຕະຫຼອດເວລາ
- ເອດີແອັບ ຕ້ອງໄດ້ພັດທະນາໃຫ້ສົມບູນ
- ຕ້ອງມີການຝຶກອົບຮົມການນຳໃຊ້ໃຫ້ບຸກຄະລາກອນທີ່ຮັບຜິດຊອບໂຕຈິງ
- ເພື່ອໃຫ້ຂະບວນການສຳເລັດ ແລະ ມີປະສິດທິພາບທີ່ດີ ແອັບຕ້ອງໄດ້ຮັບການອະນຸມັດເຫັນດີຈາກກະຊວງສຶກສາທິການ ແລະ ກິລາ ກໍ່ຄືກົມການສຶກສານອກໂຮງຮຽນໃນອະນາຄົດຂ້າງໜ້ານີ້.

# ການວິໄຈກ່ຽວກັບໂຄງການສຶກສາທຽບເທົ່າ

*Jana Träber & ປ່າກູ້ລີ ໄຊຍະຊ້າງ,* DVV International, ລາວ

ໃນເດືອນເມສາ 2023, ດີວີວີ ອິນເຕີເນເຊິນແນວ ໃນລາວ ໄດ້ດຳເນີນການວິໄຈກ່ຽວກັບໂຄງການສຶກສາທຽບເທົ່າ. ໂຄງການສຶກສາທຽບເທົ່າໃຫ້ຄວາມຮູ້ ແລະ ໃຫ້ທັກສະ ພ້ອມທັງໃຫ້ໂອກາດທາງເລືອກໃນການຈົບການສຶກສາຊັ້ນປະຖົມ ຫຼື ມັດທະຍົມ. ອີງຕາມຂໍ້ມູນສະຖິຕິ ຈາກການສຶກສານອກໂຮງຮຽນ (ກສນ) ໄດ້ສະຫຼຸບຈຳນວນນັກຮຽນທີ່ເຂົ້າຮ່ວມໃນໂຄງການສຶກສາທຽບເທົ່າໃນປີ 2022, ການວິໄຈຄັ້ງນີ້ມີຈຸດປະສົງເພື່ອໃຫ້ຂໍ້ມູນກ່ຽວກັບປະສົບການຂອງຜູ້ເຂົ້າຮ່ວມຫຼັງຈາກຈົບຫຼັກສູດ ແລະ ເກັບກຳຂໍ້ມູນກ່ຽວກັບແຮງຈູງໃຈຂອງຜູ້ເຂົ້າຮ່ວມ ແລະ ຜົນກະທົບຂອງຫຼັກສູດຕໍ່ສະພາບການເປັນຢູ່/ການດຳລົງຊີວິດຂອງຜູ້ເຂົ້າຮ່ວມພາຍຫຼັງຈາກສຳເລັດໂຄງການ. ໂດຍການຮ່ວມມືກັບ ສູນພັດທະນາການສຶກສານອກໂຮງຮຽນ (ສພນ), ໄດ້ມີການສ້າງແບບສອບຖາມສຳລັບສາມກຸ່ມເປົ້າໝາຍທີ່ແຕກຕ່າງກັນ ຄື: ນັກຮຽນທີ່ກຳລັງຮຽນ, ນັກຮຽນທີ່ຈົບແລ້ວ ແລະ ຄູອາຈານ ເຊິ່ງບັນດາແບບສອບຖາມດັ່ງກ່າວໄດ້ຮັບການພັດທະນາໃນກອງປະຊຸມການສ້າງຄວາມອາດສາມາດໃນລະຫວ່າງວັນທີ 10 ຫາ 12 ເມສາ 2023 ແລະ ຕໍ່ມາໄດ້ທົດສອບຢູ່ສູນ ກສນ ໃນນະຄອນຫຼວງວຽງຈັນ. ໄດ້ເລີ່ມລົງເກັບກຳຂໍ້ມູນ ແຕ່ວັນທີ 24 ຫາ 28 ເມສາ 2023, ເພື່ອນຮ່ວມງານຈາກ ດີວີວີ ແລະ ທີມງານ ວິຊາການ ສພນ ໄດ້ແບ່ງອອກເປັນ 2 ທີມ ແລະ ລົງຢ້ຽມຢາມຊຽງຂວາງທີ່ເປັນແຂວງພາກເໜືອຂອງລາວ ແລະ ແຂວງສະຫວັນນະເຂດເຊິ່ງເປັນແຂວງທີ່ຢູ່ພາກກາງຕອນໃຕ້. ແຕ່ວັນທີ 3 ຫາ 4 ພຶດສະພາ 2023 ທີມງານໄດ້ລົງເກັບກຳຂໍ້ມູນຢູ່ນະຄອນຫຼວງວຽງຈັນ. ຜູ້ຖືກສຳພາດປະກອບມີ ນັກຮຽນ 29 ຄົນ ທີ່ກຳລັງຮຽນຊັ້ນປະຖົມ, ມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ ພ້ອມດ້ວຍນັກຮຽນທີ່ຈົບແລ້ວ 16 ຄົນ ແລະ ຄູສອນ 9 ຄົນ. ກຸ່ມເປົ້າໝາຍທັງໝົດໄດ້ຖືກເລືອກເນື່ອງຈາກເຂົາເຈົ້າໄດ້ເຂົ້າຮ່ວມ ແລະ ມີປະສົບການໃນໂຄງການສຶກສາທຽບເທົ່າ.



ຈຸດປະສົງຂອງການສຶກສາຈະປະກອບສ່ວນເຂົ້າໃນລະບົບ ກສນ ເພື່ອໃຫ້ເຂົ້າຄວາມຕ້ອງການ ແລະ ຄວາມຕັ້ງໃຈຂອງຜູ້ເຂົ້າຮ່ວມໄດ້ດີຂຶ້ນ ແລະ ຍັງຈະໃຫ້

ພາບລວມທີ່ດີຂຶ້ນສຳລັບຄວາມຈຳເປັນໃນການເພີ່ມທະວີການເຊື່ອມສານລະຫວ່າງການສຶກສາໃນ ແລະ ນອກໂຮງຮຽນ. ພົບວ່າຜູ້ເຂົ້າຮ່ວມຈຳນວນຫຼາຍທີ່ຮຽນໃນ ລະບົບ ກສນ ແມ່ນເພື່ອຜົນປະໂຫຍດຂອງເຂົາເຈົ້າເອງ ທີ່ຈະໄດ້ຮັບ ແລະ ປັບປຸງຄວາມຮູ້ເຊັ່ນດຽວກັນກັບການໄດ້ຮັບໃບຢັ້ງຢືນ ແລະ ສາມາດນຳໄປສູ່ຂັ້ນຕອນຕໍ່ໄປຂອງການສຶກສາ ທີ່ອາດໝາຍເຖິງຄວາມປາດຖະໜາາໃນການສຶກສາໃນການສຶກສາຕໍ່. ນອກຈາກເຫດຜົນດັ່ງກ່າວມາແລ້ວ, ການຊອກຫາວຽກເຮັດງານທຳ ແລະ ໄດ້ຮັບການຝຶກວິຊາຊີບທີ່ສາມາດນຳໃຊ້ເຂົ້າໃນກິດຈະກຳສ້າງລາຍຮັບຂອງເຂົາເຈົ້າກໍ່ເປັນປັດໄຈເພີ່ມເຕີມທີ່ເຮັດໃຫ້ເຂົ້າຮ່ວມໂຄງການ. ມີຂໍ້ສັງເກດວ່າຜູ້ເຂົ້າຮ່ວມສ່ວນຫຼາຍເລົ່າວ່າໂຄງການສຶກສາທຽບເທົ່າໄດ້ຊ່ວຍໃຫ້ພວກເຂົາມີຄວາມຮູ້ຫຼາຍຂຶ້ນຢ່າງຫຼວງຫຼາຍ. ອີງຕາມພວກເຂົາ, ໂຄງການບໍ່ພຽງແຕ່ຊ່ວຍໃນການພັດທະນາຄວາມຮູ້ ເຊັ່ນ: ການອ່ານ, ການຂຽນ ແລະ ການຄິດໄລ່. ແຕ່ຍັງຊ່ວຍໃຫ້ມີທັກສະສັງຄົມເຊັ່ນ: ການປັບປຸງການສື່ສານກັບຜູ້ອື່ນ, ເຊິ່ງເຮັດໃຫ້ພວກເຂົາຫຼາຍຄົນມີຄວາມໝັ້ນໃຈໃນຕົນເອງ, ຮູ້ສຶກເຂົ້າກັບສັງຄົມໄດ້ດີຂຶ້ນ ແລະ ສາມາດຜູກມິດໄມຕີໄດ້. ຄວາມຮູ້ໃໝ່ທີ່ໄດ້ຮັບ ພ້ອມທັງທັກສະການປະຕິບັດເຫັນໄດ້ວ່າມີປະໂຫຍດຫຼາຍສຳລັບຊີວິດຂອງເຂົາເຈົ້າພາຍຫຼັງຈົບຫຼັກສູດ. ສິ່ງເຫຼົ່ານີ້ຊ່ວຍໃນການເຮັດທຸລະກິດປະຈຳວັນຂອງພວກເຂົາ, ໃນຂະນະທີ່ນັກຮຽນທີ່ຈົບການສຶກສາຫຼາຍຄົນໄດ້ເລົ່າວ່າມີລາຍໄດ້ເພີ່ມຂຶ້ນຫຼັງຈາກຈົບຫຼັກສູດ ເຊິ່ງນັກຮຽນບາງຄົນກໍ່ໄດ້ມີວຽກເຮັດ.

ຢ່າງໃດກໍ່ຕາມ, ບໍ່ແມ່ນທຸກຄົນທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ. ໄລຍະຫ່າງລະຫວ່າງບ້ານຂອງຜູ້ເຂົ້າຮ່ວມ ແລະ ສູນ ກສນ ລວມທັງການເຊື່ອມໂຍງຂອງການເຮັດວຽກ ແລະ ການສຶກສາໃນຊີວິດປະຈຳວັນຂອງເຂົາເຈົ້າ, ນອກຈາກສິ່ງທ້າທາຍອື່ນໆ, ການການມີສ່ວນຮ່ວມທີ່ສຳຄັນໃນໂຄງການ. ຍົກສູງຄວາມຮັບຮູ້ກ່ຽວກັບໂຄງສຶກສາການທຽບເທົ່າ ແລະ ສາມາດທຽບເທົ່າການສຶກສາໃນລະບົບເຊັ່ນດຽວກັນກັບການລວມເອົາທ່າແຮງຂອງການຮຽນຮູ້ອອນໄລນ໌ເຂົ້າໃນໂຄງການ, ລວມທັງການຝຶກອົບຮົມພະນັກງານທ້ອງຖິ່ນເພື່ອສ້າງທັກສະໃຫ້ເຂົາເຈົ້າ ແລະ ການປະເມີນຄວາມຕ້ອງການເພີ່ມເຕີມ.

# ແມ່ຍິງຕົວແບບຂອງກຸ່ມສ້າງລາຍຮັບເມືອງເຊໂປນ

*ໄຊຊະນະ ແສງປະທີບ,* DVV International, ເມືອງນອງ, ແຂວງສະຫວັນນະເຂດ

ນາງ ອາເພະ ອາຍຸ 38 ປີ ມີອາຊີບ ເຮັດໄຮ່ ,ລ້ຽງສັດ ແລະ ຫາເຄື່ອງປ່າຂອງດົງຂາຍຕາມລະດູການ ເປັນປະຊາຊົນບ້ານລະຄຶມ ເມືອງ ເຊໂປນ, ແຂວງສະຫວັນນະເຂດ. ໄດ້ສ້າງຄອບຄົວ ແລະ ມີລູກ 4 ຄົນ ລູກຂອງລາວຍັງນ້ອຍ ແລະ ຍັງບໍ່ສາດມາດຫາກຸ້ມຕົນເອງໄດ້ ເພາະຍັງຮຽນໜັງສືຢູ່ໃນໂຮງຮຽນປະຖົມປະຈຳບ້ານ ດັ່ງນັ້ນຈຶ່ງເຮັດໃຫ້ຄອບຄົວຂອງລາວທຸກຍາກຂາດເຂີນຫຼາຍ.

ກ່ອນທີ່ລາວຈະເຂົ້າຮ່ວມໂຄງການລາວ ຕົນເອງແມ່ນໄດ້ເຮັດໄຮ່ປູກເຂົ້າ ໃນການເຮັດໄຮ່ນີ້ບາງປີກໍ່ໄດ້ ແຕ່ບາງປີຟ້າຝົນບໍ່ດີກໍ່ເຮັດໃຫ້ຜົນຜະລິດບໍ່ກຸ້ມກິນ ບາງມື້ກໍ່ໄດ້ໄປຊອກຫາເຄື່ອງປ່າຂອງດົງມາຂາຍຕາມລະດູການເຊັ່ນວ່າ: ຫາດອກແຂມ, ໜໍ່ໄມ້ຕາມທຳມະຊາດມາຂາຍ. ແຕ່ກໍ່ໄດ້ພຽງຈຸນເຈືອຄອບຄົວເລັກໜ້ອຍ.

ຫຼັງຈາກທີ່ທາງໂຄງການ ໄດ້ເຂົ້າມາຝຶກວິຊາຊີບ ແລະ ສ້າງຕັ້ງກຸ່ມແມ່ຍິງສ້າງລາຍຮັບຂຶ້ນ ເຮັດໃຫ້ແມ່ຍິງໄດ້ຮູ້ທັກສະວິຊາຊີບ ການຕໍ່າສິ້ນລວດລາຍຊົນເຜົ່າມັງກອງ ເຊິ່ງເປັນການສ້າງຮູບແບບລາຍສິ້ນແຕ່ດັ່ງເດີມຂອງຊາວບ້ານ, ທາງໂຄງການຝຶກຄວາມຮູ້ນີ້ໃຫ້ ເຮັດໃຫ້ລາວມີວຽກ ແລະ ມີລາຍຮັບເພີ່ມຂຶ້ນ, ອາເພະ ເວົ້າວ່າ "ຂ້ອຍໄດ້ເອົາໃຈໃສ່ຕໍ່າຫູກ ແຕ່ລະມື້ ໃນ 1 ເດືອນ ຂ້ອຍສາມາດຕໍ່າສິ້ນໄດ້ປະມານ 3 ຜືນ, ຂາຍຜືນໜຶ່ງລາຄາ: 350,000 ກີບ. ແຕ່ລະເດືອນກໍ່ຂາຍ 2- 3 ຜືນ. ຄິດສະເລ່ຍເປັນເງິນໄດ້ 700,000-1,050,000ກີບ/ເດືອນ.

ລາວເວົ້າວ່າ "ໃນຕໍ່ໜ້າຫາກໂຄງການນີ້ໝົດໄປ ຂ້ອຍກໍ່ຈະສືບຕໍ່ຕໍ່າສິ້ນເພາະການຕໍ່າສິ້ນນີ້ ເປັນການສົ່ງເສີມສ້າງລາຍຮັບເຂົ້າສູ່ຄອບຄົວຂອງຂ້ອຍ ແລະ ໃນອະນາຄົດຂ້ອຍກໍ່ຈະສອນການຕໍ່ຫູກນີ້ໃຫ້ກັບລູກສາວຂອງຂ້ອຍເພື່ອໃນຕໍ່ໜ້າລາວສ້າງຄອບຄົວໄປຢູ່ນຳຜົວກໍ່ພໍມີອາຊີບຕິດຕົວຂອງລາວ".

ຊື່ ນາງ ມ່ອນ ອາຍຸ 23 ປີ ອາຊີບ ເຮັດໄຮ່ ແລະ ຊອກເຄື່ອງປ່າຂອງດົງຕາມທຳມະຊາດມາຂາຍ, ຢູ່ບ້ານລະເຕືອງ ເມືອງ ເຊໂປນ, ແຂວງສະຫວັນນະເຂດ ລາວອາໄສຢູ່ນຳພໍ່ ແມ່ ລາວວ່າ "ໃນຄອບຄົວຂ້ອຍມີເອື້ອຍນ້ອງຮ່ວມກັນ 3 ຄົນ ເຊິ່ງຂ້ອຍເປັນລູກຜູ້ທີ 2, ເອື້ອຍກົກແມ່ນໄດ້ແຕ່ງງານ ອອກເຮືອນໄປຢູ່ນຳຜົວ ຍັງແຕ່ຂ້ອຍແລະນ້ອງຊາຍຫຼ້າຢູ່ນຳພໍ່ແມ່ ແລະ ຮຽນຊັ້ນປະຖົມປີທີ 5 ທີ່ໂຮງຮຽນປະຖົມສົມບູນບ້ານລະເຕືອງ".



ກ່ອນການເຂົ້າຮ່ວມໂຄງການ ກິດຈະກຳສ້າງລາຍຮັບຂອງແມ່ຍິງ ຕົນເອງແມ່ນໄດ້ເຮັດໄຮ່ແບບເລື່ອນລອຍຮ່ວມກັບພໍ່ແມ່, ບາງປີ ຟ້າຝົນບໍ່ອຳນວຍ ເກີດໄພແຫ້ງແລ້ງ ເຂົ້າບໍ່ໄດ້ຮັບໝາກຜົນເຕັມເມັດເຕັມໜ່ວຍ ເຮັດໃຫ້ຄອບຄົວມີເຂົ້າກິນບໍ່ພຽງພໍຕະຫຼອດປີ ບາງຄັ້ງກໍ່ຈຳເປັນໄດ້ອອກຈາກບ້ານເພື່ອໄປຫາຊອກວຽກເຮັດງານທຳ ເພື່ອມາຈຸນເຈືອຄອບຄົວ ແຕ່ບໍ່ມີຄົນເບິ່ງພໍ່ແມ່ ແລະ ນ້ອງຊາຍກໍ່ຍັງຮຽນຢູ່. ຈຶ່ງໄດ້ໄປໃນບາງຊ່ວງເວລາໃດໜຶ່ງຂອງປີ.

ຫຼັງຈາກທີ່ທາງໂຄງການໄດ້ເຂົ້າມາຝຶກວິຊາຊີບ ແລະ ສ້າງຕັ້ງກຸ່ມສ້າງລາຍຮັບແມ່ຍິງຂຶ້ນ ເຮັດໃຫ້ແມ່ຍິງໃນບ້ານໄດ້ຮຽນຮູ້ທັກສະ, ຝຶກວິຊາຊີບ ທີ່ຫຼາກຫຼາຍຫົວຂໍ້ບໍ່ວ່າຈະເປັນການສານຫວດດ້ວຍຕົວ, ການຖັກຟອຍດ້ອຍດອກແຂມ, ການຕັດຫຍິບເຄື່ອງ. ຫົວໜ້າສູນການຮຽນຮູ້ຊຸມຊົນ ແລະ ນາຍບ້ານເພິ່ນກໍ່ໄດ້ຈັດເຂົ້າໃນກຸ່ມແມ່ນຍິງສ້າງລາຍຮັບຂອງບ້ານໂດຍເປັນຫົວໜ້າກຸ່ມຕັດຫຍິບ.

ລາວເຂົ້າໄປນຳໃຊ້ຈັກຫຍິບໃນສູນຮຽນຮູ້ຊຸມຊົນປະຈຳບ້ານພັດປ່ຽນກັບກັບໝູ່ພາຍໃນກຸ່ມ ເລີ້ມຕົ້ນແມ່ນນຳເອົາສິ້ນຂອງແມ່ ແລະ ໝູ່ເພື່ອນໃກ້ຄຽງໄປຫຍິບໃຫ້ໂດຍບໍ່ໄດ້ຕັ້ງລາຄາສູງຜືນລະ10,000ກີບ, ຕໍ່ມາຕົນເອງມີຄວາມສຳນານໃນການນຳໃຊ້ຈັກຫຍິບ ການຕັດຫຍິບສິ້ນກໍ່ງາມຂຶ້ນ ຖືກກັບຄວາມຕ້ອງການຂອງລູກຄ້າ ຈຶ່ງໄດ້ປັບລາຄາຂຶ້ນເປັນ 20,000ກີບ/ຜືນ. ປະຈຸບັນໄດ້ຫຍິບສິ້ນປະມານ 15ຜືນ/ເດືອນ ເປັນເງິນ: 20,000x15 = 300,000ກີບ/ເດືອນ. ລາຍຮັບທີ່ໄດ້ຈາກການຕັດຫຍິບສິ້ນແມ່ນໄດ້ທ້ອນເງິນໄວ້ເຂົ້າສູນ 5,000ກີບ/ຜືນ ເພື່ອເປັນເງິນບູລະນະຈັກຫຍິບຮ່ວມກັນກັບສະມາຊິກກຸ່ມຕັດຫຍິບ ປະຈຸບັນແມ່ນມີເງິນຄັງກຸ່ມ 150,000ກີບ.

ຫຼັງຈາກໂຄງການນີ້ໝົດໄປລາວກໍ່ຈະສືບຕໍ່ຫຍິບສິ້ນໄປຕະຫຼອດ ເພື່ອເປັນລາຍໄດ້ເສີມໃຫ້ຄອບຄົວຕໍ່ໄປໃນອະນາຄົດແມ່ນຢາກມີຄວາມຮູ້ຕື່ມອີກເລື່ອງການຕັດຫຍິບ ແລະ ຈະເປີດຮ້ານຕັດຫຍິບເຄື່ອງເປັນຂອງຕົນເອງ.



## ສິ່ງທີ່ໜ້າສົນໃຈ

**Important Website in region**

www.nfedi.org
www.rda.org.la
www.aspbae.org
www.seameocelll.org

## ສິ່ງພິມທີ່ໜ້າສົນໃຈ

**Adult Education and Development**

AED 86 (2019): The good adult educator
AED 85: Role and Impact of Adult Education
AED 84: Inclusion and Diversity
AED 83: Skills and Competencies

**International Perspectives in Adult Education**

IPE 81 (2023): Adult Learning and Education with
IPE 80 (2022): Citizenship education and ALE
IPE 79 (2019): The contribution of adult education to active participatory citizenship
IPE 77: Rethinking adult learning and education - Asia perspectives

**ຈັດພິມໂດຍ ດີວີວີ ອິນເຕີເນເຊິນແນວ ຮ່ວມກັບຄູ່ ຮ່ວມພັດທະນາໃນ ສປປ ລາວ, ກຳປູເຈຍ ແລະ ອາຊີຕາເວັນອອກສ່ຽງໃຕ້**

**ທ່ານສາມາດຂໍຈົດໝາຍຂ່າວນີ້ໄດ້ທີ່ ຫ້ອງການຂອງພວກເຮົາ**

ກອງບັນນາທິການ: ພິລານີ ພິດສະໄໝ, ອຸ່ນເພັງ ຄຳມັງ, ຂັນທອງ ອິນທະຈັກ
ທີມງານບັນນາທິການ: ດາລຸນນີ ສີສຸລາດ, Jana Träber, Inabat Serikzhanova, ດອກຄຳ ຊົມສີທາປັນຍາ, ສົມໃຈ ແກ້ວເມກ
ບັນນາທິການ: Dr. Johann Heilmann and Christoph Jost

## ຈົດໝາຍຂ່າວ

The ASPBAE Bulletin access via www.aspbae.org
NEXUS - access via www.uil.unesco.org
Voice Rising - access via www.icae2.org
Education Policy Matters - via www.unescobkk.org

## ສິ່ງພິມໃໝ່

**Curriculum managerALE**
**Curriculum institutionALE** in Lao language
**Curriculum globALE** in Lao language
**DVV International Annual Report 2021**
**Reaching the Marginalized** - Good Practices in ALE in the Middle East, Southeast and South Asia
**Handbook for NFE Facilitators**
**Soft Skills** Training Manual for Falicitator

**ດີວີວີ ອິນເຕີເນເຊິນແນວ**
ຫ້ອງການປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້
351/19 ຖະໜົນວັດນາກໃຫຍ່, ບ້ານທ່າພະລານໄຊ
ເມືອງສີສັດຕະນາກ
ຕູ້ ປ.ນ. 1215, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ.: +856 21 315832-3
ແຟັກ: +856 21 312511
info@dvv-international.la
www.dvv-international.la

# Education for Everyone. Worldwide. Lifelong.